# ທະນາຄານ ເມແບັງ ສາຂາ ໜອງດ້ວງ

ເອກະສານລາຍງານການເງິນ

ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2019

**ສາລະບານ**


| | *ໜ້າ* |
|---|---|
| ຂໍ້ມູນທົ່ວໄປ | 1 |
| ບົດລາຍງານຂອງຄະນະບໍລິຫານ | 2 |
| ບົດລາຍງານຂອງນັກກວດສອບອິດສະຫຼະ | 3 - 5 |
| ໃບລາຍງານຜົນການດຳເນີນງານ | 6 - 7 |
| ໃບລາຍງານຖານະການເງິນ | 8 - 9 |
| ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ | 10 |
| ໃບລາຍງານກະແສເງິນສົດ | 11 - 12 |
| ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ | 13 - 33 |

# ທະນາຄານ ເມແບັງ ສາຂາ ໜອງດ້ວງ

ຂໍ້ມູນທົ່ວໄປ

**ສາຂາ**

ທະນາຄານ ເມແບັງ ສາຂາ ໜອງດ້ວງ ("ສາຂາ") ແມ່ນສາຂາ ທີ່ໄດ້ສ້າງຕັ້ງໃນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ("ສປປ ລາວ") ຂອງ ທະນາຄານ ມາເລຍັນ ເບີຫັດ, ທະນາຄານທີ່ຈົດທະບຽນໃນປະເທດມາເລເຊຍ. ສາຂາໄດ້ດຳເນີນງານພາຍໃຕ້ໃບອະນຸຍາດດຳເນີນທຸລະກິດເລກທີ 03 ອອກໃຫ້ໂດຍທະນາຄານແຫ່ງ ສປປ ລາວ ("ທຫລ") ວັນທີ 03 ມີນາ 2016.

ໃນວັນທີ 29 ສິງຫາ 2019, ສະພາອຳນວຍການ ("ສະພາ") ຂອງທະນາຄານ ມາເລຍັນ ເບີຫັດ ("ເມແບັງ") ໄດ້ອອກຄຳຕັດສິນກ່ຽວກັບການຢຸດເຊົາກິດຈະການຂອງ ທະນາຄານ ມາເລຍັນ ເບີຫັດ ສາຂາ ໜອງດ້ວງ ("ສາຂາ ໜອງດ້ວງ"). ດັ່ງນັ້ນ, ຊັບສິນ ແລະ ໜີ້ສິນຂອງສາຂາ ໜອງດ້ວງແມ່ນຈະຖືກໂອນໄປໃຫ້ ທະນາຄານ ມາເລຍັນ ເບີຫັດ ສາຂາລາວ ("ສາຂາລາວ") ພ້ອມທັງສິດ ແລະ ພັນທະທັງໝົດ.

ໃນວັນທີ 17 ທັນວາ 2019, ສາຂາ ໜອງດ້ວງໄດ້ສົ່ງລາຍລະອຽດການຈັດຕັ້ງປະຕິບັດຕາມທີ່ກ່າວມາຂ້າງເທິງ ແລະ ໄດ້ຮັບອະນຸມັດຈາກກົມຄຸ້ມຄອງທະນາຄານທຸລະກິດຂອງ ທຫລ ("ກຄທ") ເຊິ່ງຫຼັງຈາກຢຸດເຊົາກິດຈະການສາຂາ ໜອງດ້ວງ ໃນວັນທີ 31 ທັນວາ 2019, ຊັບສິນ ແລະ ໜີ້ສິນຂອງສາຂາ ໜອງດ້ວງທັງໝົດພ້ອມດ້ວຍສິດ ແລະ ພັນທະຕ່າງໆ ຈະຖືກໂອນໄປໃຫ້ສາຂາລາວ. ເມື່ອສາຂາ ໜອງດ້ວງສຳເລັດການປິດກິດຈະການ ແລະ ຮວມຕົວເຂົ້າກັບສາຂາລາວ, ສາຂາ ໜອງດ້ວງຖືກຮຽກຮ້ອງໃຫ້ສົ່ງບົດລາຍງານຜົນການຈັດຕັ້ງປະຕິບັດໃຫ້ກົມຄຸ້ມຄອງທະນາຄານທຸລະກິດ ເພື່ອອ້າງອີງເຖິງການຖອນໃບອະນຸຍາດດຳເນີນທຸລະກິດ ແລະ ໃບທະບຽນວິສາຫະກິດ.

ໃນວັນທີ 25 ທັນວາ 2019, ກົມຄຸ້ມຄອງທະນາຄານທຸລະກິດ ໄດ້ອອກໜັງສືທາງການສະບັບເລກທີ 723/ກຄທ ວ່າດ້ວຍການຢຸດເຊົາກິດຈະການສາຂາ. ນອກນັ້ນ, ກົມຄຸ້ມຄອງທະນາຄານທຸລະກິດ ຍັງເຫັນດີໃນຫຼັກການຂອງໃບສະເໜີ ແລະ ຮຽກຮ້ອງໃຫ້ສາຂາ ໜອງດ້ວງຍື່ນລາຍລະອຽດແຜນການຈັດຕັ້ງປະຕິບັດໃຫ້ກັບ ກຄທ.

ໃນວັນທີ 27 ທັນວາ 2019, ສາຂາ ໜອງດ້ວງໄດ້ຢຸດເຊົາການດຳເນີນກິດຈະການພາຍໃຕ້ຊື່ ທະນາຄານ ມາເລຍັນ ເບີຫັດ ສາຂາ ໜອງດ້ວງ. ຫຼັງຈາກປິດເອກະສານລາຍງານການເງິນ ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2019, ສາຂາໄດ້ສຳເລັດການໂອນຂໍ້ມູນທາງບັນຊີທັງໝົດໃຫ້ກັບສາຂາລາວ ແລະ ພ້ອມທັງແຈ້ງໃຫ້ກັບຜູ້ສະໜອງ, ລູກຄ້າກ່ຽວກັບການຢຸດເຊົາຂອງສາຂາ.

ທຶນຈົດທະບຽນໃນເບື້ອງຕົ້ນຂອງສາຂາແມ່ນ 100,121,729,000 ກີບ. ທຶນຈົດທະບຽນທີ່ຖອກແລ້ວຕົວຈິງ ນະວັນທີ 31 ທັນວາ 2019 ແມ່ນ 100,121,729,000 ກີບ (31 ທັນວາ 2018: 100,121,729,000 ກີບ). ກິດຈະກຳຕົ້ນຕໍຂອງສາຂາແມ່ນ ສະໜອງທຸກການບໍລິການດ້ານການທະນາຄານ ແລະ ການບໍລິການດ້ານການເງິນທີ່ກ່ຽວຂ້ອງໃນ ສປປ ລາວ.

ສາຂາຕັ້ງຢູ່ຖະໜົນ ອາຊຽນ, ບ້ານ ໜອງດ້ວງໃຕ້, ເມືອງ ສີໂຄດຕະບອງ, ນະຄອນຫຼວງວຽງຈັນ, ສປປ ລາວ.

**ຄະນະບໍລິຫານ**

ສະມາຊິກຂອງຄະນະບໍລິຫານພາຍໃນປີປະກອບດ້ວຍ:

| *ຊື່* | *ຕຳແໜ່ງ* | *ວັນທີແຕ່ງຕັ້ງ* |
|---|---|---|
| ທ່ານ ນາງ ແພງສົມຈິດ ພົນໂພສີ | ຜູ້ອຳນວຍການສາຂາ | 01 ຕຸລາ 2015 |
| ທ່ານ ສິດທິພົນ ສີສຸດາຈັນ | ຫົວໜ້າພະແນກການເງິນ | 28 ພຶດສະພາ 2018 |

# ທະນາຄານ ເມແບັງ ສາຂາ ໜອງດ້ວງ

ຂໍ້ມູນທົ່ວໄປ (ຕໍ່)

**ຄະນະກຳມະການສະພາບໍລິຫານ**

ສະມາຊິກຂອງຄະນະກຳມະການສະພາບໍລິຫານໄດ້ສ້າງຕັ້ງຂຶ້ນໃໝ່ ໃນວັນທີ 25 ທັນວາ 2019 ພາຍໃຕ້ໜັງສືທາງການເລກທີ 723/ກຄທ ອອກໂດຍກົມຄຸ້ມຄອງທະນາຄານທຸລະກິດ ຂອງ ທຫລ ຈົນເຖິງມື້ອອກເອກະສານລາຍງານການເງິນສະບັບນີ້ປະກອບດ້ວຍ:

| *ຊື່* | *ຕຳແໜ່ງ* |
|---|---|
| ທ່ານ ນາງ ແພງສົມຈິດ ພົນໂພສີ | ປະທານ |
| ທ່ານ ສິດທິພົນ ສີສຸດາຈັນ | ສະມາຊິກ |

**ຕົວແທນທາງກົດໝາຍ**

ຕົວແທນທາງກົດໝາຍຂອງສາຂາ ແຕ່ວັນທີ 1  ມັງກອນ 2019 ເຖິງ ວັນທີ 31 ທັນວາ 2019 ແມ່ນ ທ່ານ ນາງ ເພັງສົມຈິດ ພົນໂພສີ – ຜູ້ອຳນວຍການສາຂາ. ຕົວແທນທາງກົດໝາຍຂອງສາຂາ ແຕ່ວັນທີ 1 ມັງກອນ 2020 ເຖິງມື້ອອກບົດລາຍງານສະບັບນີ້ແມ່ນ ທ່ານ ນາງ ເພັງສົມຈິດ ພົນໂພສີ – ປະທານຄະນະກຳມະການສະພາບໍລິຫານ.

**ນັກກວດສອບ**

ນັກກວດສອບບັນຊີຂອງສາຂາແມ່ນ ບໍລິສັດ ເອີນແອນຢັງ ລາວ ຈຳກັດ.

# ທະນາຄານ ເມແບັງ ສາຂາ ໜອງດ້ວງ

ບົດລາຍງານຂອງຄະນະບໍລິຫານ

ຄະນະບໍລິຫານຂອງທະນາຄານ ເມແບັງ ສາຂາ ໜອງດ້ວງ ("ສາຂາ") ມີຄວາມຍິນດີໃນການນຳສະເໜີບົດລາຍງານສະບັບນີ້ ແລະ ເອກະສານລາຍງານການເງິນຂອງສາຂາ ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2019.

**ຄວາມຮັບຜິດຊອບຂອງຄະນະບໍລິຫານຕໍ່ເອກະສານລາຍງານການເງິນ**

ຄະນະບໍລິຫານຂອງສາຂາ ມີໜ້າທີ່ຮັບຜິດຊອບຕໍ່ການກະກຽມເອກະສານລາຍງານການເງິນຂອງແຕ່ລະປີການບັນຊີທີ່ສະແດງໃຫ້ເຫັນຄວາມຖືກຕ້ອງຕາມຄວາມເປັນຈິງຂອງຖານະທາງການເງິນຂອງສາຂາ ແລະ ຜົນປະກອບການ ແລະ ກະແສເງິນສົດພາຍໃນປີ. ໃນການກະກຽມ ແລະ ນຳສະເໜີເອກະສານລາຍງານການເງິນດັ່ງກ່າວ, ຄະນະບໍລິຫານຕ້ອງປະຕິບັດດັ່ງນີ້:

- ເລືອກເຟັ້ນນະໂຍບາຍດ້ານການບັນຊີທີ່ເໝາະສົມ ແລະ ຈັດຕັ້ງປະຕິບັດຢ່າງສະໝໍ່າສະເໝີ;
- ພິຈາລະນາ ແລະ ຄາດຄະເນຢ່າງສົມເຫດສົມຜົນ ແລະ ຮອບຄອບ;
- ຖະແຫຼງການວ່າບັນດາມາດຕະຖານການບັນຊີທີ່ກ່ຽວຂ້ອງໄດ້ຖືກປະຕິບັດ, ທຸກຂໍ້ຂັດແຍ່ງ ຫຼື ຂໍ້ແຕກຕ່າງທີ່ສຳຄັນຕໍ່ການປະຕິບັດຕໍ່ມາດຕະຖານການບັນຊີຕ້ອງຖືກນຳມາເປີດເຜີຍ ແລະ ອະທິບາຍຢູ່ໃນເອກະສານລາຍງານການເງິນ; ແລະ
- ກະກຽມເອກະສານລາຍງານການເງິນບົນພື້ນຖານຄວາມສືບເນື່ອງໃນການດຳເນີນທຸລະກິດ ໂດຍສອດຄ່ອງກັບແຜນການຍຸດເຊົາສາຂາທີ່ໄດ້ສົ່ງໃຫ້ກົມຄຸ້ມຄອງທະນາຄານທຸລະກິດຂອງ ທຫລ ວັນທີ 17 ທັນວາ 2019.

ຄະນະບໍລິຫານ ມີໜ້າທີ່ຮັບປະກັນວ່າ ການບັນທຶກບັນຊີໄດ້ຖືກປະຕິບັດຢ່າງຖືກຕ້ອງເຊິ່ງໄດ້ເປີດເຜີຍຖານະການເງິນຂອງສາຂາຢ່າງເໝາະສົມໃນທຸກເວລາ ແລະ ຮັບປະກັນວ່າການບັນທຶກບັນຊີແມ່ນສອດຄ່ອງກັບລະບົບການບັນຊີທີ່ໄດ້ນຳໃຊ້. ນອກຈາກນັ້ນ, ຄະນະບໍລິຫານຍັງຕ້ອງຮັບຜິດຊອບຕໍ່ການຮັກສາຊັບສົມບັດຄົງທີ່ຂອງສາຂາ ແລະ ຮັບປະກັນວ່າສາຂາມີຂັ້ນຕອນການກວດສອບທີ່ເໝາະສົມ ເພື່ອປ້ອງກັນ ແລະ ຊອກຫາການສໍ້ໂກງ ຫຼື ສິ່ງທີ່ຜິດປົກກະຕິອື່ນໆ.

ຄະນະບໍລິຫານໄດ້ຢັ້ງຢືນວ່າ ສາຂາໄດ້ປະຕິບັດຕາມເງື່ອນໄຂຂ້າງເທິງໃນການກະກຽມເອກະສານລາຍງານການເງິນທີ່ກ່ຽວຂ້ອງ.

**ຖະແຫຼງການຂອງຄະນະບໍລິຫານ**

ຄະນະບໍລິຫານມີຄວາມຍິນດີຖະແຫຼງວ່າ ເອກະສານລາຍງານການເງິນໄດ້ຖືກກະກຽມຢ່າງຖືກຕ້ອງຕາມຄວາມເປັນຈິງ ໂດຍສອດຄ່ອງກັບກົດໝາຍວ່າດ້ວຍການບັນຊີຂອງ ສປປ ລາວ ແລະ ບັນດາລະບຽບການທີ່ວາງອອກໂດຍທະນາຄານແຫ່ງ ສປປ ລາວ ທີ່ກ່ຽວຂ້ອງກັບການກະກຽມ ແລະ ການນຳສະເໜີເອກະສານລາຍງານການເງິນ. ພາຍໃຕ້ພື້ນຖານສະພາບຄ່ອງ ດັ່ງທີ່ໄດ້ກ່າວໃນ*ບົດອະທິບາຍ ເລກທີ 2.2.*

ຕາງໜ້າ ແລະ ໃນນາມຄະນະບໍລິຫານ:

ທະນາຄານ ມາເລຍັນເບີກິດ ສາຂາໜອງດ້ວງ
Malayan Banking Berhad Nongduang Branch

ທ່ານ ນາງ ແພງສົມຈິດ ພົນໂພສີ
ຜູ້ອຳນວຍການສາຂາ

ນະຄອນຫຼວງວຽງຈັນ, ສປປລາວ

15 ເມສາ 2020

EY
Building a better working world

Ernst & Young Lao Co., Ltd
6th floor, Kolao Tower I, 23 Singha Road
Nongbone Village, Saysettha District
Vientiane Capital, Lao P.D.R.

Tel: +856 21 455 077
Fax: +856 21 455 078
ey.com

ເລກທີອ້າງອີງ: 61317474/ 21504418-LAS

# ບົດລາຍງານຂອງນັກກວດສອບອິດສະຫຼະ

ຮຽນ: ເຈົ້າຂອງ ທະນາຄານ ເມແບັງ ສາຂາ ໜອງດ້ວງ

*ຄຳເຫັນ*

ພວກຂ້າພະເຈົ້າໄດ້ດຳເນີນການກວດສອບເອກະສານລາຍງານການເງິນຂອງທະນາຄານ ເມແບັງ ສາຂາ ໜອງດ້ວງ ("ສາຂາ"), ເຊິ່ງປະກອບດ້ວຍໃບລາຍງານຖານະການເງິນ ນະວັນທີ 31 ທັນວາ 2019, ໃບລາຍງານຜົນການດຳເນີນງານ, ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ ແລະ ໃບລາຍງານກະແສເງິນສົດ ສຳລັບປີທີ່ສິ້ນສຸດວັນທີດັ່ງກ່າວ, ແລະ ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນທີ່ປະກອບດ້ວຍບົດສະຫຼຸບຂອງບັນດານະໂຍບາຍທາງບັນຊີທີ່ສຳຄັນ.

ໃນຄຳເຫັນຂອງພວກຂ້າພະເຈົ້າ, ເອກະສານລາຍງານການເງິນຂອງສາຂາໄດ້ຖືກກະກຽມຢ່າງຖືກຕ້ອງຕາມຄວາມເປັນຈິງ, ໂດຍສອດຄ່ອງກັບກົດໝາຍວ່າດ້ວຍການບັນຊີແຫ່ງ ສປປ ລາວ ແລະ ບັນດາລະບຽບການຕ່າງໆທີ່ໄດ້ວາງອອກໂດຍ ທະນາຄານແຫ່ງ ສປປ ລາວ ທີ່ກ່ຽວຂ້ອງກັບການກະກຽມ ແລະ ການນຳສະເໜີເອກະສານລາຍງານການເງິນພາຍໃຕ້ພື້ນຖານຄວາມບໍ່ສືບເນື່ອງໃນການດຳເນີນທຸລະກິດຂອງການບັນຊີ ດັ່ງທີ່ໄດ້ກ່າວໃນ*ບົດອະທິບາຍ ເລກທີ 2.2.*

*ພື້ນຖານການອອກຄຳເຫັນ*

ພວກຂ້າພະເຈົ້າໄດ້ດຳເນີນການກວດສອບໂດຍສອດຄ່ອງກັບມາດຕະຖານດ້ານການກວດສອບສາກົນ (ISAs). ບັນດາຄວາມຮັບຜິດຊອບຂອງພວກຂ້າພະເຈົ້າທີ່ກຳນົດໄວ້ພາຍໃຕ້ບັນດາມາດຕະຖານເຫຼົ່ານັ້ນໄດ້ຖືກອະທິບາຍເພີ່ມເຕີມໃນວັກ *ຄວາມຮັບຜິດຊອບຂອງນັກກວດສອບໃນການກວດສອບເອກະສານລາຍງານການເງິນ* ຂອງບົດລາຍງານຂອງພວກຂ້າພະເຈົ້າ. ພວກຂ້າພະເຈົ້າແມ່ນມີຄວາມເປັນເອກະລາດຈາກສາຂາໂດຍສອດຄ່ອງກັບກົດຈັນຍາບັນທາງບັນຊີສຳລັບນັກວິຊາຊີບບັນຊີຂອງສະພາມາດຕະຖານສາກົນດ້ານຈັນຍາບັນ (IESBA Code) ແລະ ບັນດາຂໍ້ກຳນົດທາງດ້ານຈັນຍາບັນທີ່ກ່ຽວຂ້ອງກັບການກວດສອບເອກະສານລາຍງານການເງິນຂອງພວກຂ້າພະເຈົ້າໃນ ສປປ ລາວ ແລະ ພວກຂ້າພະເຈົ້າຍັງໄດ້ປະຕິບັດບັນດາຄວາມຮັບຜິດຊອບທາງດ້ານຈັນຍາບັນອື່ນໆໂດຍສອດຄ່ອງກັບກົດຈັນຍາບັນທາງບັນຊີສຳລັບນັກວິຊາຊີບບັນຊີຂອງສະພາມາດຕະຖານສາກົນດ້ານຈັນຍາບັນ. ພວກຂ້າພະເຈົ້າເຊື່ອວ່າຫຼັກຖານການກວດສອບທີ່ພວກຂ້າພະເຈົ້າໄດ້ຮັບແມ່ນພຽງພໍ ແລະ ເໝາະສົມເພື່ອເປັນພື້ນຖານໃຫ້ແກ່ການອອກຄຳເຫັນຂອງພວກຂ້າພະເຈົ້າ.

*ບັນຫາທີ່ຄວນເອົາໃຈໃສ່ – ພື້ນຖານການບັນຊີ*

ພວກຂ້າພະເຈົ້າສະເໜີໃຫ້ເອົາໃຈໃສ່ຕໍ່ *ບົດອະທິບາຍ ເລກທີ 2.2* ຂອງເອກະສານລາຍງານການເງິນ, ທີ່ໄດ້ອະທິບາຍພື້ນຖານຂອງການບັນຊີ. ນະວັນທີຂອງເອກະສານລາຍງານການເງິນ, ສາຂາຢູ່ໃນລະຫວ່າງດຳເນີນການຕາມຂັ້ນຕອນການຍື່ນເອກະສານທີ່ຈຳເປັນຕາມທີ່ຂໍ້ກຳນົດໄດ້ລະບຸໄວ້ ສຳລັບການຖອນໃບອະນຸຍາດດຳເນີນທຸລະກິດຂອງສາຂາ. ດ້ວຍເຫດນັ້ນ, ສາຂາໄດ້ປ່ຽນແປງຫຼັກການບັນຊີສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2019 ຈາກຫຼັກການແຫ່ງຄວາມສືບເນື່ອງໃນການດຳເນີນທຸລະກິດ ປ່ຽນເປັນຫຼັກການແຫ່ງຄວາມບໍ່ສືບເນື່ອງໃນການດຳເນີນທຸລະກິດ. ດັ່ງນັ້ນ, ຕົວເລກທີ່ນຳສະເໜີຈຶ່ງບໍ່ສາມາດສົມທຽບກັບຕົວເລກຂອງປີປັດຈຸບັນ.

ພວກຂ້າພະເຈົ້າສະເໜີໃຫ້ເອົາໃຈໃສ່ຕໍ່ *ບົດອະທິບາຍ ເລກທີ 3* ຂອງເອກະສານລາຍງານການເງິນ, ທີ່ໄດ້ອະທິບາຍພື້ນຖານຂອງການບັນຊີທີ່ໄດ້ຖືກນຳໃຊ້ໂດຍສາຂາ. ບັນດານະໂຍບາຍການບັນຊີເຫຼົ່ານີ້ແມ່ນບໍ່ໄດ້ມີຈຸດປະສົງທີ່ຈະນຳສະເໜີຖານະທາງການເງິນ, ຜົນການດຳເນີນງານ ແລະ ກະແສເງິນສົດຂອງສາຂາ ເພື່ອໃຫ້ສອດຄ່ອງກັບຫຼັກການບັນຊີສາກົນທີ່ຍອມຮັບໂດຍທົ່ວໄປ.

ຄຳເຫັນຂອງພວກຂ້າພະເຈົ້າແມ່ນບໍ່ໄດ້ສະແດງຄຳເຫັນແບບມີເງື່ອນໄຂຕໍ່ກັບບັນຫານີ້.

**EY**
Building a better working world

*ຄວາມຮັບຜິດຊອບຂອງຄະນະບໍລິຫານຂອງສາຂາຕໍ່ເອກະສານລາຍງານການເງິນ*

ຄະນະບໍລິຫານສາຂາ ແມ່ນມີຄວາມຮັບຜິດຊອບໃນການກະກຽມ ແລະ ນຳສະເໜີເອກະສານລາຍງານການເງິນໂດຍສອດຄ່ອງກັບກົດໝາຍວ່າດ້ວຍການບັນຊີແຫ່ງ ສປປ ລາວ ແລະ ບັນດາລະບຽບການອື່ນໆ ທີ່ວາງອອກໂດຍທະນາຄານແຫ່ງ ສປປ ລາວ ທີ່ກ່ຽວຂ້ອງໃນການກະກຽມ ແລະ ການນຳສະເໜີເອກະສານລາຍງານການເງິນພາຍໃຕ້ຫຼັກການແຫ່ງຄວາມບໍ່ສືບເນື່ອງໃນການດຳເນີນທຸລະກິດ ດັ່ງທີ່ໄດ້ກ່າວໄວ້ໃນ*ບົດອະທິບາຍ ເລກທີ 2.2,* ແລະ ສຳລັບບັນດາການຄວບຄຸມພາຍໃນທີ່ກ່ຽວຂ້ອງທີ່ທາງຄະນະບໍລິຫານ ເຫັນວ່າມີຄວາມຈຳເປັນໃນການກະກຽມເອກະສານລາຍງານການເງິນໃຫ້ມີຄວາມຖືກຕ້ອງຕາມຄວາມເປັນຈິງ ແລະ ປາສະຈາກຂໍ້ຜິດພາດອັນໃຫຍ່ຫຼວງ, ທີ່ອາດຈະເກີດຈາກການສໍ້ໂກງ ຫຼື ຂໍ້ຜິດພາດຕ່າງໆ.

*ຄວາມຮັບຜິດຊອບຂອງນັກກວດສອບອິດສະຫຼະໃນການກວດສອບເອກະສານລາຍງານການເງິນ*

ຈຸດປະສົງໃນການກວດສອບຂອງພວກຂ້າພະເຈົ້າ ແມ່ນເພື່ອຮັບປະກັນການຮັບປະກັນທີ່ສົມເຫດສົມຜົນວ່າເອກະສານລາຍງານການເງິນໂດຍພາບລວມແມ່ນປາສະຈາກຂໍ້ຜິດພາດອັນໃຫຍ່ຫຼວງ, ບໍ່ວ່າຈະເປັນຍ້ອນການສໍ້ໂກງ ຫຼື ຍ້ອນຄວາມຜິດພາດຕ່າງໆ, ແລະ ເພື່ອການອອກບົດລາຍງານຂອງນັກກວດສອບອິດສະຫຼະທີ່ປະກອບມີຄຳເຫັນຂອງພວກຂ້າພະເຈົ້າ. ການຮັບປະກັນທີ່ສົມເຫດສົມຜົນແມ່ນການຮັບປະກັນໃນລະດັບສູງແຕ່ບໍ່ໄດ້ຮັບປະກັນວ່າການກວດສອບທີ່ໄດ້ດຳເນີນໂດຍສອດຄ່ອງກັບມາດຕະຖານດ້ານການກວດສອບສາກົນຈະສາມາດກວດພົບຂໍ້ຜິດພາດອັນໃຫຍ່ຫຼວງທີ່ອາດເກີດຂຶ້ນໄດ້ຕະຫຼອດທັງໝົດ. ຂໍ້ຜິດພາດສາມາດເກີດຂຶ້ນຈາກການສໍ້ໂກງ ຫຼື ຂໍ້ຜິດພາດຕ່າງໆ ແມ່ນຖືກພິຈາລະນາວ່າສຳຄັນຈາກລາຍການດຽວ ຫຼື ຫຼາຍລາຍການລວມກັນ, ເຊິ່ງສາມາດຄາດຄະເນວ່າ ແລະ ມີອິດທິພົນຕໍ່ການຕັດສິນໃຈທາງເສດຖະກິດຂອງຜູ້ນຳໃຊ້ພື້ນຖານຂອງເອກະສານລາຍງານການເງິນສະບັບນີ້.

ໃນການກວດສອບໂດຍສອດຄ່ອງກັບມາດຕະຖານດ້ານການກວດສອບສາກົນ, ພວກຂ້າພະເຈົ້າໄດ້ໃຊ້ການຕັດສິນ ແລະ ວິນິໄສແບບມືອາຊີບໃນຕະຫຼອດການດຳເນີນການກວດສອບ. ພວກຂ້າພະເຈົ້າຍັງໄດ້:

ກຳນົດ ແລະ ປະເມີນບັນດາຄວາມສ່ຽງຂອງຂໍ້ຜິດພາດອັນໃຫຍ່ຫຼວງຂອງເອກະສານລາຍງານການເງິນບໍ່ວ່າຈະເປັນຍ້ອນການສໍ້ໂກງ ຫຼື ຍ້ອນຄວາມຜິດພາດຕ່າງໆ, ອອກແບບ ແລະ ດຳເນີນຂັ້ນຕອນການກວດສອບເພື່ອຮອງຮັບບັນດາຄວາມສ່ຽງເຫຼົ່ານັ້ນ ແລະ ເພື່ອຮັບປະກັນວ່າຈະໄດ້ຮັບເອົາຫຼັກຖານການກວດສອບທີ່ພຽງພໍ ແລະ ເໝາະສົມເພື່ອເປັນພື້ນຖານໃຫ້ແກ່ການອອກຄຳເຫັນຂອງພວກຂ້າພະເຈົ້າ. ຄວາມສ່ຽງຂອງການບໍ່ສາມາດກວດພົບຂໍ້ຜິດພາດອັນໃຫຍ່ຫຼວງທີ່ມີຜົນມາຈາກການສໍ້ໂກງແມ່ນສູງກວ່າຜົນທີ່ມາຈາກຄວາມຜິດພາດ, ເນື່ອງຈາກວ່າການສໍ້ໂກງອາດລວມມີການສົມຮູ້ຮ່ວມຄິດ, ການປອມແປງ, ການລະເລີຍໂດຍຕັ້ງໃຈ, ການບິດເບືອນຫຼືລະເມີດຫຼັກການການຄວບຄຸມພາຍໃນ.

ທຳຄວາມເຂົ້າໃຈກ່ຽວກັບການຄວບຄຸມພາຍໃນທີ່ກ່ຽວຂ້ອງກັບການກວດສອບເພື່ອອອກແບບຂັ້ນຕອນການກວດສອບທີ່ເໝາະສົມກັບສະພາບການຕ່າງໆແຕ່ບໍ່ໄດ້ມີຈຸດປະສົງເພື່ອສະແດງຄຳເຫັນກ່ຽວກັບປະສິດທິພາບຂອງການຄວບຄຸມພາຍໃນຂອງສາຂາ.

ປະເມີນຄວາມເໝາະສົມຂອງບັນດານະໂຍບາຍທາງບັນຊີທີ່ນຳໃຊ້ ແລະ ຄວາມສົມເຫດສົມຜົນຂອງການຄາດຄະເນທາງການບັນຊີ ແລະ ການເປີດເຜີຍທີ່ກ່ຽວຂ້ອງທີ່ໄດ້ຖືກນຳໃຊ້ໂດຍຄະນະບໍລິຫານຂອງສາຂາ.

ພວກຂ້າພະເຈົ້າໄດ້ປຶກສາຫາລືກັບຄະນະບໍລິຫານຂອງສາຂາກັບບັນດາບັນຫາອື່ນໆ, ການວາງແຜນຂອບເຂດ ແລະ ເວລາຂອງການກວດສອບ ແລະ ຂໍ້ຄົ້ນພົບທາງການກວດສອບທີ່ສຳຄັນປະກອບມີບັນດາຂໍ້ບົກຜ່ອງທີ່ສຳຄັນໃດໆໃນການຄວບຄຸມພາຍໃນທີ່ພວກຂ້າພະເຈົ້າໄດ້ກຳນົດໃນລະຫວ່າງການກວດສອບຂອງພວກຂ້າພະເຈົ້າ.

ບໍລິສັດ ເອີນແອນຢັງ ລາວ ຈຳກັດ

Ernst & Young Lao Ltd

ນະຄອນຫຼວງວຽງຈັນ, ສປປລາວ

15 ເມສາ 2020

A member firm of Ernst & Young Global Limited

# ທະນາຄານ ເມແບັງ ສາຂາ ໜອງດ້ວງ

ໃບລາຍງານຜົນການດຳເນີນງານ
ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2019

| *ລຳດັບ* | *ລາຍການ* | *ບົດອະທິບາຍ ເລກທີ* | *2019 ພັນກີບ* | *2018 ພັນກີບ* |
|---|---|---|---|---|
| **A.** | **ລາຍຮັບ ແລະ ລາຍຈ່າຍຈາກການດຳເນີນງານ** | | | |
| **1.** | **ລາຍຮັບດອກເບ້ຍ ແລະ ຄ້າຍຄືດອກເບ້ຍ** | **4** | **3,655,554** | **4,306,211** |
| **2.** | **ລາຍຈ່າຍດອກເບ້ຍ ແລະ ຄ້າຍຄືດອກເບ້ຍ** | **4** | **(567,025)** | **(454,436)** |
| **I.** | **ລາຍຮັບສຸດທິຈາກດອກເບ້ຍ ແລະ ຄ້າຍຄືດອກເບ້ຍ** | | **3,088,529** | **3,851,775** |
| **3** | **ລາຍຮັບຄ່າທຳນຽມ ແລະ ຄ່ານາຍໜ້າ** | **5** | **123,907** | **244,237** |
| **4** | **ລາຍຈ່າຍຄ່າທຳນຽມ ແລະ ຄ່ານາຍໜ້າ** | **5** | **(12,907)** | **(5,019)** |
| **5** | **ຂາດທຶນສຸດທິຈາກການຊື້ຂາຍເງິນຕາຕ່າງປະເທດ** | **6** | **(257,835)** | **(248,709)** |
| **II.** | **ລາຍຮັບສຸດທິຈາກການດຳເນີນງານ** | | **2,941,694** | **3,842,284** |
| **B** | **ລາຍຮັບ ແລະ ລາຍຈ່າຍອື່ນໆ** | | | |
| **6** | **ລາຍຮັບຈາກການດຳເນີນງານອື່ນໆ** | **7** | **72,749** | **82,827** |
| **7** | **ລາຍຈ່າຍບໍລິຫານ** | | **(2,850,064)** | **(2,308,527)** |
| 7.1 | ເງິນເດືອນ ແລະ ຄ່າໃຊ້ຈ່າຍອື່ນໆໃຫ້ແກ່ພະນັກງານ | 8 | (1,598,371) | (1,130,460) |
| 7.2 | ລາຍຈ່າຍບໍລິຫານອື່ນໆ | 9 | (1,251,693) | (1,178,067) |
| **8** | **ຄ່າຫຼຸ້ຍຫ້ຽນ ແລະ ຄ່າເສື່ອມ** | **15** | **(4,354,835)** | **(1,133,299)** |
| **9** | **ລາຍຈ່າຍອື່ນໆຈາກການດຳເນີນງານ** | **10** | **(3,030)** | **(19,756)** |

# ທະນາຄານ ເມແບັງ ສາຂາ ໜອງດ້ວງ

ໃບລາຍງານຜົນການດຳເນີນງານ (ຕໍ່)
ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2019

| ລຳດັບ | ລາຍການ | ບົດອະທິບາຍ ເລກທີ | 2019 ພັນກີບ | 2018 ພັນກີບ |
|---|---|---|---|---|
| **10** | ເງິນແຮສຸດທິສຳລັບເງິນກູ້ທີ່ບໍ່ເກີດດອກອອກຜົນ | **14.2** | **(10,506,407)** | **(8,565,543)** |
| **III.** | (ຂາດທຶນ)/ກຳໄລທັງໝົດກ່ອນອາກອນ | | **(14,699,893)** | **(8,102,014)** |
| **11** | ອາກອນກຳໄລພາຍໃນປີ | **19.2** | **-** | **-** |
| **IV.** | (ຂາດທຶນ)/ກຳໄລຫຼັງຫັກອາກອນ | | **(14,699,893)** | **(8,102,014)** |

ກະກຽມໂດຍ:

ທ່ານ ສິດທິພົນ ສີສຸດາຈັນ
ຫົວໜ້າພະແນກການເງິນ

ອະນຸມັດໂດຍ:

ທ່ານ ນາງ ແພງສີມຈິດ ພົນໂພສີ
ຜູ້ອຳນວຍການສາຂາ

ນະຄອນຫຼວງວຽງຈັນ, ສປປລາວ

15 ເມສາ 2020

# ທະນາຄານເມແບັງ ສາຂາ ໜອງດ້ວງ

ໃບລາຍງານຖານະການເງິນ
ນະວັນທີ 31 ທັນວາ 2019

| *ລຳດັບ* | *ລາຍການ* | *ບົດອະທິບາຍ ເລກທີ* | *31/12/2019 ພັນກີບ* | *31/12/2018 ພັນກີບ* |
|---|---|---|---|---|
| | ***ຊັບສິນ*** | | | |
| **I** | **ເງິນສົດ ແລະ ເງິນຝາກຢູ່ທະນາຄານແຫ່ງ ສປປ ລາວ ("ທຫລ")** | | **25,031,729** | **38,763,430** |
| 1 | ເງິນສົດໃນຄັງ | 11 | - | 2,097,855 |
| 2 | ເງິນຝາກກັບ ທຫລ | 12 | 25,031,729 | 36,665,575 |
| **II** | **ເງິນຝາກກັບທະນາຄານອື່ນ** | **13** | **30,927,067** | **24,332,982** |
| 1 | ເງິນຝາກກະແສລາຍວັນ | | 30,927,067 | 332,982 |
| 2 | ເງິນຝາກມີກຳນົດ | | - | 24,000,000 |
| **III** | **ເງິນກູ້ແລະເງິນລ່ວງໜ້າສຳລັບລູກຄ້າ, ຫລັງຫັກເງິນແຮສະເພາະສຳລັບກິດຈະກຳສິນເຊື່ອສຸດທິ** | **14** | **36,723,406** | **55,781,712** |
| **IV** | **ຊັບສິນບັດຄັງທີ່** | | **-** | **4,487,809** |
| 1 | ຊັບສິນບັດຄັງທີ່ມີຕົວຕົນ | 15.1 | - | 4,487,809 |
| 2 | ຊັບສິນບັດຄັງທີ່ບໍ່ມີຕົວຕົນ | 15.2 | - | - |
| **V** | **ຊັບສິນອື່ນໆ** | | **570,158** | **522,410** |
| 1 | ໜີ້ຕ້ອງຮັບດອກເບ້ຍຄ້າງຮັບ | | - | 384,430 |
| 2 | ຊັບສິນອື່ນໆ | 16 | 570,158 | 137,980 |
| | **ລວມຊັບສິນທັງໝົດ** | | **93,252,360** | **123,888,343** |
| | ***ໜີ້ສິນ ແລະ ທຶນ*** | | | |
| **I** | **ໜີ້ຕ້ອງສົ່ງທະນາຄານ** | **17** | **-** | **8,000,000** |
| 1 | ເງິນຝາກມີກຳນົດ | | - | 8,000,000 |
| **II** | **ໜີ້ຕ້ອງສົ່ງໃຫ້ລູກຄ້າ** | **18** | **15,513,646** | **23,457,097** |
| 1 | ເງິນຝາກກະແສລາຍວັນ | | 2,551,649 | 2,574,350 |
| 2 | ເງິນຝາກປະຢັດ | | 1,839,475 | 6,561,943 |
| 3 | ເງິນຝາກມີກຳນົດ | | 11,122,522 | 14,320,804 |
| **III** | **ໜີ້ສິນອື່ນໆ** | | **747,961** | **681,914** |
| 1 | ດອກເບ້ຍຄ້າງຈ່າຍ | | - | 262,182 |
| 2 | ໜີ້ຕ້ອງສົ່ງອາກອນ | 19.1 | 66 | 34,575 |
| 3 | ໜີ້ສິນອື່ນໆ | 20 | 747,895 | 385,157 |
| | **ລວມໜີ້ສິນທັງໝົດ** | | **16,261,607** | **32,139,011** |

# ທະນາຄານ ເມແບັງ ສາຂາ ໜອງດ້ວງ

ໃບລາຍງານຖານະການເງິນ (ຕໍ່)
ນະວັນທີ 31 ທັນວາ 2019

| ລຳດັບ | ລາຍການ | ບົດອະທິບາຍ ເລກທີ | 31/12/2019 ພັນກີບ | 31/12/2018 ພັນກີບ |
|---|---|---|---|---|
| **IV** | **ທຶນຕົນເອງ ແລະ ຄັງສຳຮອງ** | | | |
| 1 | ທຶນຈົດທະບຽນທີ່ຖອກແລ້ວ | 21 | 100,121,729 | 100,121,729 |
| 2 | ເງິນແຮທົ່ວໄປສຳລັບກິດຈະກຳສິນເຊື່ອ | | 179,196 | 237,882 |
| 3 | ກຳໄລລໍຖ້າປັນຜົນ | 14.2 | (23,310,172) | (8,610,279) |
| | **ລວມທຶນທັງໝົດ** | | **76,990,753** | **91,749,332** |
| | **ລວມໜີ້ສິນ ແລະ ທຶນທັງໝົດ** | | **93,252,360** | **123,888,343** |

| ລຳດັບ | ລາຍການນອກໃບລາຍງານຖານະການເງິນ | 31/12/2019 ພັນກີບ | 31/12/2018 ພັນກີບ |
|---|---|---|---|
| **I** | **ຄຳໝັ້ນສັນຍາທີ່ໄດ້ໃຫ້** | | |
| 1 | ຄຳໝັ້ນສັນຍາສະໜອງທຶນໃຫ້ກັບລູກຄ້າ | 886,000 | 1,705,000 |
| | **ລວມຄຳໝັ້ນສັນຍາທີ່ໄດ້ໃຫ້** | **886,000** | **1,705,000** |
| **II** | **ຫຼັກຊັບຄ້ຳປະກັນ ແລະ ຊວດຈຳ** | | |
| | **ຫຼັກຊັບຄ້ຳປະກັນ ແລະ ການຊວດຈຳສຳລັບໜັງສືຄ້ຳປະກັນ** | **886,000** | **1,705,000** |
| 1 | ຫຼັກຊັບຄ້ຳປະກັນ ແລະ ຊວດຈຳສຳລັບໜັງສືຄ້ຳປະກັນທີ່ອອກໃຫ້ແກ່ລູກຄ້າ | 886,000 | 1,705,000 |
| | **ລວມຫຼັກຊັບຄ້ຳປະກັນ ແລະ ຊວດຈຳ** | **886,000** | **110,597,342** |

ກະກຽມໂດຍ:

ທ່ານ ສິດທິພົນ ສີສຸດາຈັນ
ຫົວໜ້າພະແນກການເງິນ

ອະນຸມັດໂດຍ:

ທ່ານ ນາງ ແພງສົມຈິດ ພົນໂພສີ
ຜູ້ອຳນວຍການສາຂາ

ນະຄອນຫຼວງວຽງຈັນ, ສປປລາວ

15 ເມສາ 2020

## ທະນາຄານ ເມແບັງ ສາຂາ ໜອງດ້ວງ

ໃບລາຍງານສ່ວນປ່ຽນແປງຂອງທຶນເຈົ້າຂອງ
ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2019

| ລາຍການ | ທຶນຈົດທະບຽນທີ່ຖອກແລ້ວ ພັນກີບ | ຄັງແຮຕາມລະບຽບການ ພັນກີບ | ເງິນແຮສຳລັບເງິນກູ້ທີ່ເກີດດອກອອກຜົນ ພັນກີບ | ຂາດທຶນສະສົມ ພັນກີບ | ລວມ ພັນກີບ |
|---|---|---|---|---|---|
| **ຍອດເຫຼືອນະວັນທີ 1 ມັງກອນ 2019** | **100,121,729** | **-** | **237,882** | **(8,610,279)** | **91,749,332** |
| ຂາດທຶນສຸດທິພາຍໃນປີ | - | - | - | (14,699,893) | (14,699,893) |
| ເງິນແຮສຳລັບເງິນກູ້ທີ່ກິດດອກອອກຜົນທີ່ເກັບຄືນພາຍໃນປີ | - | - | (60,933) | - | (60,933) |
| ສ່ວນຜິດດ່ຽງຈາກອັດຕາແລກປ່ຽນເງິນຕາຕ່າງປະເທດ | - | - | 2,247 | - | 2,247 |
| **ຍອດເຫຼືອນະວັນທີ 31 ທັນວາ 2019** | **100,121,729** | **-** | **179,196** | **(23,310,172)** | **76,990,753** |

ກະກຽມໂດຍ:

ທ່ານ ສິດທິພົນ ສີສຸດາຈັນ
ຫົວໜ້າພະແນກການເງິນ

ອະນຸມັດໂດຍ:

ທ່ານ ນາງ ແພງສີມຈິດ ພົນໂພສີ
ຜູ້ອຳນວຍການສາຂາ

ນະຄອນຫຼວງວຽງຈັນ, ສປປລາວ

15 ເມສາ 2020

# ທະນາຄານເມແບັງ ສາຂາ ໜອງດ້ວງ

ໃບລາຍງານກະແສເງິນສົດ
ສໍາລັບປີທີ່ສິ້ນສຸດວັນທີ 31 ທັນວາ 2019

| *ລາຍການ* | *ບົດອະທິບາຍ ເລກທີ* | *2019 ພັນກີບ* | *2018 ພັນກີບ* |
|---|---|---|---|
| **(ຂາດທຶນ)/ກໍາໄລສຸດທິກ່ອນຫັກອາກອນ** | | **(14,699,893)** | **(8,102,014)** |
| *ດັດແກ້ສໍາລັບ:* | | | |
| ລາຍຈ່າຍຄ່າຫຼຸ້ຍຫ້ຽນ ແລະ ຄ່າເສື່ອມ | | 4,354,835 | 1,133,299 |
| ລາຍຈ່າຍເງິນແຮສໍາລັບຂາດທຶນທາງສິນເຊື່ອສຸດທິ | 14.2 | 39,228,684 | 8,548,300 |
| ເກັບຄືນເງິນແຮໜີ້ເສຍຂອງເງິນກູ້ແກ່ລູກຄ້າ | 14.2 | (28,722,277) | (3,270,952) |
| ລາຍຮັບດອກເບ້ຍ | | (3,655,554) | (4,306,211) |
| ລາຍຈ່າຍດອກເບ້ຍ | | 567,025 | 454,436 |
| ຂາດທຶນຈາກອັດຕາແລກປ່ຽນທີ່ເກີດຈາກການຕີມູນຄ່າຄືນໃໝ່ ຂອງບັນຊີທີ່ເປັນເງິນໃນສະກຸນເງິນຕ່າງປະເທດ | | 257,835 | 248,709 |
| **ກະແສເງິນສົດຈາກກິດຈະກໍາການດໍາເນີນງານກ່ອນການ ປ່ຽນແປງຊັບສິນ ແລະ ໜີ້ສິນໃນການດໍາເນີນງານ** | | **(2,669,345)** | **(5,294,433)** |
| ເພີ່ມຂຶ້ນ/(ຫຼຸດລົງ)ຂອງຊັບສິນຈາກການ ດໍາເນີນງານ | | | |
| ໜີ້ຕ້ອງຮັບຈາກທະນາຄານອື່ນ | | 25,577,241 | (16,932,159) |
| ເງິນກູ້ຢືມ ແລະ ເງິນລ່ວງໜ້າໃຫ້ແກ່ລູກຄ້າ | | 8,551,899 | (13,400,660) |
| ຊັບສິນອື່ນໆ | | 5,799,355 | 811,374 |
| (ເພີ່ມຂຶ້ນ)/ຫຼຸດລົງ ຂອງໜີ້ສິນຈາກການດໍາເນີນງານ | | | |
| ໜີ້ຕ້ອງສົ່ງໃຫ້ທະນາຄານອື່ນ | | (8,000,000) | (2,552,398) |
| ເງິນຝາກ ແລະ ໜີ້ຕ້ອງສົ່ງອື່ນໆໃຫ້ລູກຄ້າ | | (7,943,451) | 12,408,165 |
| ໜີ້ສິນອື່ນໆ | | (4,343,127) | (1,506,794) |
| ດອກເບ້ຍໄດ້ຮັບ | | 4,039,984 | 4,397,260 |
| ດອກເບ້ຍຈ່າຍແລ້ວ | | (829,207) | (240,320) |
| ອາກອນກໍາໄລຈ່າຍພາຍໃນປີ | 19.2 | - | - |
| **ກະແສເງິນສົດສຸດທິ(ໃຊ້ໃນ)/ຈາກກິດຈະກໍາການດໍາເນີນງານ** | | **20,183,349** | **(22,309,965)** |
| **ກິດຈະກໍາດ້ານການລົງທຶນ** | | | |
| ຈ່າຍໃນການຊື້ຊັບສົມບັດ ແລະ ອຸປະກອນ | | (1,939,194) | - |
| ການສະສາງຈາກການຂາຍອຸປະກອນ | | 195,470 | 606,094 |
| **ກະແສເງິນສົດສຸດທິຈາກ/(ໃຊ້ໃນ)ກິດຈະກໍາການລົງທຶນ** | | **(1,743,724)** | **606,094** |

# ທະນາຄານ ເມແບັງ ສາຂາ ໜອງດ້ວງ

ໃບລາຍງານກະແສເງິນສົດ (ຕໍ່)
ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2019

| *ລາຍການ* | *ບົດອະທິບາຍ ເລກທີ* | *2019 ພັນກີບ* | *2018 ພັນກີບ* |
|---|---|---|---|
| **ກິດຈະກຳດ້ານການເງິນ** | | | |
| **ກະແສເງິນສົດສຸດທິຈາກກິດຈະກຳທາງການເງິນ** | | **-** | **-** |
| **ປ່ຽນແປງສຸດທິຂອງເງິນສົດ ແລະ ທຽບເທົ່າເງິນສົດ** | | **18,439,625** | **(18,432,919)** |
| **ເງິນສົດ ແລະ ທຽບເທົ່າເງິນສົດໃນຕົ້ນປີ** | | **12,487,442** | **30,920,361** |
| ຜົນກະທົບຂອງສ່ວນຕ່າງຈາກອັດຕາແລກປ່ຽນເງິນຕາຕ່າງປະເທດ | | - | - |
| **ເງິນສົດ ແລະ ທຽບເທົ່າເງິນສົດໃນທ້າຍປີ** | **22** | **30,927,067** | **12,487,442** |

ກະກຽມໂດຍ:

ທ່ານ ສົດທິພົນ ສີສຸດາຈັນ
ຫົວໜ້າພະແນກການເງິນ

ອະນຸມັດໂດຍ:

ທ່ານ ນາງ ແພງສົມຈິດ ພົນໂພສີ
ຜູ້ອຳນວຍການສາຂາ

ນະຄອນຫຼວງວຽງຈັນ, ສປປລາວ

15 ເມສາ 2020

## 1. ຂໍ້ມູນກ່ຽວກັບທະນາຄານ

ທະນາຄານ ເມແບັງ ສາຂາ ໜອງດ້ວງ ("ສາຂາ") ແມ່ນທະນາຄານສາຂາຕ່າງປະເທດ ເຊິ່ງລົງທຶນ ແລະ ຈົດທະບຽນໃນ ສປປ ລາວ.

*ການສ້າງຕັ້ງ ແລະ ການດຳເນີນງານ*

ສາຂາໄດ້ສ້າງຕັ້ງຂຶ້ນເປັນສາຂາທະນາຄານ ມາເລຍັນ ເບີຫັດ, ທະນາຄານທີ່ຈົດທະບຽນໃນປະເທດມະເລເຊຍ. ສາຂາໄດ້ດຳເນີນງານພາຍໃຕ້ໃບອະນຸຍາດດຳເນີນທຸລະກິດເລກທີ 03 ອອກໃຫ້ໂດຍທະນາຄານແຫ່ງ ສປປ ລາວ ("ທຫລ") ວັນທີ 03 ມີນາ 2016.

ກິດຈະກຳຕົ້ນຕໍຂອງສາຂາແມ່ນ ສະໜອງທຸກການບໍລິການດ້ານການທະນາຄານ ແລະ ການບໍລິການດ້ານການເງິນທີ່ກ່ຽວຂ້ອງໃນ ສປປ ລາວ.

ໃນວັນທີ 29 ສິງຫາ 2019, ສະພາອຳນວຍການ ("ສະພາ") ຂອງທະນາຄານ ມາເລຍັນ ເບີຫັດ ("ເມແບັງ") ໄດ້ອອກຄຳຕັດສິນກ່ຽວກັບການຢຸດເຊົາກິດຈະການຂອງ ທະນາຄານ ມາເລຍັນ ເບີຫັດ ສາຂາ ໜອງດ້ວງ ("ສາຂາ ໜອງດ້ວງ"). ດັ່ງນັ້ນ, ຊັບສິນ ແລະ ໜີ້ສິນຂອງສາຂາ ໜອງດ້ວງແມ່ນຈະຖືກໂອນໄປໃຫ້ ທະນາຄານ ມາເລຍັນ ເບີຫັດ ສາຂາລາວ ("ສາຂາລາວ") ພ້ອມທັງສິດ ແລະ ພັນທະທັງໝົດ.

ໃນວັນທີ 17 ທັນວາ 2019, ສາຂາ ໜອງດ້ວງໄດ້ສົ່ງລາຍລະອຽດການຈັດຕັ້ງປະຕິບັດຕາມທີ່ກ່າວມາຂ້າງເທິງ ແລະ ໄດ້ຮັບອະນຸມັດຈາກກົມຄຸ້ມຄອງທະນາຄານທຸລະກິດຂອງ ທຫລ ("ກຄທ") ເຊິ່ງຫຼັງຈາກຢຸດເຊົາກິດຈະການສາຂາ ໜອງດ້ວງໃນວັນທີ 31 ທັນວາ 2019, ຊັບສິນ ແລະ ໜີ້ສິນຂອງສາຂາ ໜອງດ້ວງທັງໝົດພ້ອມດ້ວຍສິດ ແລະ ພັນທະຕ່າງໆ ຈະຖືກໂອນໄປໃຫ້ສາຂາລາວ. ເມື່ອສາຂາ ໜອງດ້ວງສຳເລັດການປິດກິດຈະການ ແລະ ຮວມຕົວເຂົ້າກັບສາຂາລາວ, ສາຂາ ໜອງດ້ວງຈະຖືກຮຽກຮ້ອງໃຫ້ສົ່ງບົດລາຍງານຜົນການຈັດຕັ້ງປະຕິບັດໃຫ້ກົມຄຸ້ມຄອງທະນາຄານທຸລະກິດ ເພື່ອອ້າງອີງເຖິງການຖອນໃບອະນຸຍາດດຳເນີນທຸລະກິດ ແລະ ໃບທະບຽນວິສາຫະກິດ.

ໃນວັນທີ 25 ທັນວາ 2019, ກົມຄຸ້ມຄອງທະນາຄານທຸລະກິດ ໄດ້ອອກໜັງສືທາງການສະບັບເລກທີ 723/ກຄທ ວ່າດ້ວຍການຢຸດເຊົາກິດຈະການສາຂາ. ນອກນັ້ນ, ກົມຄຸ້ມຄອງທະນາຄານທຸລະກິດ ຍັງເຫັນດີໃນຫຼັກການຂອງໃບສະເໜີ ແລະ ຮຽກຮ້ອງໃຫ້ສາຂາ ໜອງດ້ວງຍື່ນລາຍລະອຽດແຜນການຈັດຕັ້ງປະຕິບັດໃຫ້ກັບ ກຄທ.

ໃນວັນທີ 27 ທັນວາ 2019, ສາຂາ ໜອງດ້ວງໄດ້ຢຸດເຊົາການດຳເນີນກິດຈະການພາຍໃຕ້ຊື່ ທະນາຄານ ມາເລຍັນ ເບີຫັດ ສາຂາ ໜອງດ້ວງ. ຫຼັງຈາກປິດເອກະສານງາຍງານການເງິນ ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2019, ສາຂາໄດ້ສຳເລັດການໂອນຂໍ້ມູນທາງບັນຊີທັງໝົດໃຫ້ກັບສາຂາລາວ ແລະ ພ້ອມທັງແຈ້ງໃຫ້ກັບຜູ້ສະໜອງ, ລູກຄ້າກ່ຽວກັບການຢຸດເຊົາຂອງສາຂາ.

*ທີ່ຕັ້ງ*

ສາຂາຕັ້ງຢູ່ຖະໜົນ ອາຊຽນ, ບ້ານ ໜອງດ້ວງໃຕ້, ເມືອງ ໂຄດຕະບອງ, ນະຄອນຫຼວງວຽງຈັນ, ສປປ ລາວ.

*ພະນັກງານ*

ພະນັກງານທັງໝົດຂອງສາຂາ ນະວັນທີ 31 ທັນວາ 2019 ແມ່ນ 10 ຄົນ (31 ທັນວາ 2018: 8 ຄົນ).

## 2. ພື້ນຖານການກະກຽມ

### *2.1 ຖະແຫຼງການປະຕິບັດຕາມ*

ຄະນະບໍລິຫານຂອງສາຂາ ຕ້ອງໄດ້ມີການກະກຽມເອກະສານລາຍງານການເງິນ ໂດຍອີງຕາມກົດໝາຍວ່າດ້ວຍການບັນຊີຂອງ ສປປ ລາວ ແລະ ບັນດາກົດລະບຽບທີ່ໄດ້ວາງອອກໂດຍທະນາຄານແຫ່ງ ສປປ ລາວ ທີ່ກ່ຽວຂ້ອງກັບການກະກຽມ ແລະ ການນຳສະເໜີເອກະສານລາຍງານການເງິນ ພາຍໃຕ້ພື້ນຖານຄວາມບໍ່ສືບເນື່ອງໃນການດຳເນີນທຸລະກິດຂອງການບັນຊີ ດັ່ງທີ່ກ່າວໃນ*ບົດອະທິບາຍ ເລກທີ 2.2.*

### *2.2 ພື້ນຖານຂອງການກະກຽມ*

ສາຂາບັນທຶກບັນຊີເປັນເງິນກີບ ("ກີບ") ແລະ ໄດ້ກະກຽມເອກະສານລາຍງານການເງິນເປັນຫົວໜ່ວຍ ("ພັນກີບ") ໂດຍອີງຕາມດຳລັດເລກທີ 02/ນຍ ຂອງນາຍົກລັດຖະມົນຕີແຫ່ງ ສປປ ລາວ ລົງວັນທີ 22 ມີນາ 2000 ແລະ ກົດໝາຍວ່າດ້ວຍການບັນຊີຂອງ ສປປ ລາວ ແລະ ລະບຽບການທີ່ກຳນົດໃຊ້ໂດຍທະນາຄານແຫ່ງ ສປປ ລາວ ທີ່ກ່ຽວຂ້ອງກັບການກະກຽມ ແລະ ການນຳສະເໜີເອກະສານລາຍງານການເງິນ ("LAS") ພາຍໃຕ້ພື້ນຖານຄວາມບໍ່ສືບເນື່ອງໃນການດຳເນີນທຸລະກິດຂອງການບັນຊີ.

ເອກະສານລາຍງານການເງິນສະບັບນີ້ໄດ້ຖືກກະກຽມໂດຍນຳໃຊ້ຫຼັກການບັນຊີ, ຂັ້ນຕອນ ແລະ ການລາຍງານທາງການບັນຊີທີ່ຖືກຍອມຮັບໃນ ສປປ ລາວ. ດັ່ງນັ້ນ, ໃບລາຍງານຜົນການດຳເນີນງານ, ໃບລາຍງານຖານະການເງິນ, ໃບລາຍງານສ່ວນປ່ຽນແປງຂອງທຶນເຈົ້າຂອງ, ໃບລາຍງານກະແສເງິນສົດ ແລະ ບົດອະທິບາຍຊ້ອນທ້າຍເອກະສານລາຍງານແມ່ນບໍ່ໄດ້ສ້າງຂຶ້ນສຳລັບທ່ານທີ່ບໍ່ໄດ້ຮັບຮູ້ຫຼັກການບັນຊີ, ຂັ້ນຕອນ ແລະ ການປະຕິບັດການບັນຊີຂອງລາວ. ນອກນັ້ນ, ເອກະສານລາຍງານການເງິນສະບັບນີ້ບໍ່ມີຈຸດປະສົງເພື່ອນຳສະເໜີຖານະການເງິນ, ຜົນຂອງການດຳເນີນງານ ແລະ ກະແສເງິນສົດ ອີງຕາມຫຼັກການບັນຊີ ແລະ ການປະຕິບັດການບັນຊີທີ່ຍອມຮັບໄດ້ຂອງປະເທດອື່ນນອກຈາກ ສປປ ລາວ.

*ປີການບັນຊີ*

ປີການບັນຊີທີ່ກະກຽມເອກະສານລາຍງານການເງິນຂອງສາຂາ ແມ່ນເລີ່ມຕັ້ງແຕ່ວັນທີ 1 ມັງກອນ ແລະ ສິ້ນສຸດວັນທີ 31 ທັນວາ.

*ການຮັບຮອງເອົາຫຼັກການແຫ່ງຄວາມບໍ່ສືບເນື່ອງໃນການດຳເນີນທຸລະກິດ ໃນການກະກຽມ ແລະ ນຳສະເໜີເອກະສານລາຍງານການເງິນ*

ນະວັນທີຂອງເອກະສານລາຍງານການເງິນ, ສາຂາກຳລັງຢູ່ໃນຂັ້ນຕອນສຳເລັດການຍື່ນເອກະສານທີ່ຈຳເປັນທີ່ໄດ້ກຳນົດໄວ້ໃນລະບຽບການຖອນໃບອະນຸຍາດດຳເນີນທຸລະກິດຂອງສາຂາ. ດ້ວຍເຫດນີ້, ສາຂາໄດ້ປ່ຽນຫຼັກການການບັນຊີໃນການກະກຽມ ແລະ ການນຳສະເໜີເອກະສານລາຍງານການເງິນສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2019 ຈາກຫຼັກການແຫ່ງຄວາມສືບເນື່ອງໃນການດຳເນີນທຸລະກິດ ມາເປັນພື້ນຖານຄວາມບໍ່ສືບເນື່ອງໃນການດຳເນີນທຸລະກິດຂອງການບັນຊີ ດັ່ງສະເໜີໃນ*ບົດອະທິບາຍ ເລກທີ 3.1.*

ພາຍໃຕ້ພື້ນຖານຄວາມບໍ່ສືບເນື່ອງໃນການດຳເນີນທຸລະກິດຂອງການບັນຊີ, ຊັບສິນສະແດງໃນລາຄາຕາມບັນຊີທີ່ຕ່ຳກວ່າ ແລະ ປະເມີນຕາມມູນຄ່າສຸດທິທີ່ຈະໄດ້ຮັບ ແລະ ໜີ້ສິນສຸດທິທີ່ໄດ້ຖືກລະບຸໄວ້ໃນຈຳນວນຄາດຄະເນການຊຳລະສະສາງ. ອີງຕາມຊັບສິນ ແລະ ໜີ້ສິນຂອງສາຂາຈະຖືກໂອນໄປຫາສາຂາລາວ ພ້ອມທັງສິດ ແລະ ພັນທະທັງໝົດ. ມູນຄ່າການຮັບຮູ້ທີ່ແທ້ຈິງຂອງຊັບສິນ ແລະ ການຄາດຄະເນຊຳລະໜີ້ສິນຈະເທົ່າກັນກັບມູນຄ່າຕາມບັນຊີຂອງຊັບສິນ ແລະ ໜີ້ສິນບວກກັບດອກເບ້ຍຄ້າງຮັບ ແລະ ລົບໃຫ້ເງິນແຮ (ຖ້າມີ).

## 2. ພື້ນຖານການກະກຽມ (ຕໍ່)

### *2.2 ພື້ນຖານຂອງການກະກຽມ* (ຕໍ່)

*ຂໍ້ມູນສົມທຽບ*

ຂໍ້ມູນໃນເອກະສານລາຍງານການເງິນຂອງປີປັດຈຸບັນແມ່ນບໍ່ສາມາດສົມທຽບກັບຕົວເລກໃນປີທີ່ຜ່ານມາ ເນື່ອງຈາກວ່າປີ 2018 ສາຂາໄດ້ກະກຽມເອກະສານລາຍງານການເງິນໂດຍສອດຄ່ອງກັບຫຼັກການແຫ່ງຄວາມສືບເນື່ອງໃນການດໍາເນີນທຸລະກິດ. ໃນປີ 2019, ສາຂາກຽມເອກະສານລາຍງານການເງິນຕາມພື້ນຖານຄວາມບໍ່ສືບເນື່ອງໃນການດໍາເນີນທຸລະກິດຂອງການບັນຊີ. ນອກຈາກນັ້ນ, ເອກະສານລາຍງານການເງິນປີ 2019 ປະກອບມີການດັດແກ້ທີ່ກ່ຽວຂ້ອງກັບການເກັບຄືນ ແລະ ຈັດປະເພດຄືນໃໝ່ຂອງຊັບສິນ ຫຼື ການວັດແທກ ແລະ ການຈັດປະເພດຂອງໜີ້ສິນທີ່ບໍ່ໄດ້ປະຕິບັດໃນປີ 2018 ດັ່ງທີ່ເປີດເຜີຍໃນ *ບົດອະທິບາຍເລກທີ 3.1.*

## 3. ສະຫຼຸບນະໂຍບາຍການບັນຊີທີ່ສໍາຄັນ

### *3.1 ການປ່ຽນແປງນະໂຍບາຍການບັນຊີ*

ນະໂຍບາຍການບັນຊີທີ່ຖືກນໍາໃຊ້ໂດຍສາຂາ ໃນການກະກຽມເອກະສານລາຍງານການເງິນ ແມ່ນສອດຄ່ອງກັບການນໍາໃຊ້ໃນການກະກຽມເອກະສານລາຍງານການເງິນສໍາລັບປີທີ່ສິ້ນສຸດວັນທີ 31 ທັນວາ 2018 ຂອງສາຂາ, ຍົກເວັ້ນການປ່ຽນແປງນະໂຍບາຍການບັນຊີ ແລະ ບົດອະທິບາຍທີ່ໄດ້ກະກຽມຕາມຫຼັກການແຫ່ງຄວາມສືບເນື່ອງໃນການດໍາເນີນທຸລະກິດແມ່ນບໍ່ມີຄວາມເໝາະສົມ. ນອກຈາກນັ້ນ, ເອກະສານລາຍງານການເງິນປະກອບມີການດັດແກ້ທີ່ກ່ຽວຂ້ອງກັບການເກັບຄືນ ແລະ ຈັດປະເພດຄືນໃໝ່ຂອງຊັບສິນ ຫຼື ການວັດແທກ ແລະ ການຈັດປະເພດຂອງໜີ້ສິນ ດັ່ງຕໍ່ໄປນີ້.

#### *3.1.1 ຍອດເຫຼືອເງິນຝາກກັບ ທຫລ, ແລະ ໜີ້ຕ້ອງສົ່ງທະນາຄານອື່ນ*

ຍອດເຫຼືອເງິນຝາກກັບ ທຫລ, ແລະ ໜີ້ຕ້ອງສົ່ງທະນາຄານອື່ນແມ່ນໄດ້ສະແດງມູນຄ່າຕາມບັນຊີນະມື້ທີ່ລາຍງານ. ໃນນັ້ນ, ມູນຄ່າຕາມບັນຊີຈະຖືກກໍານົດໂດຍຍອດເຫຼືອຂອງຕົ້ນທຶນນະມື້ທີ່ລາຍງານບວກໃຫ້ (+) ດອກເບ້ຍຄ້າງຮັບສະສົມ ອີງຕາມອັດຕາດອກເບ້ຍທີ່ຢູ່ໃນສັນຍາ.

#### *3.1.2 ເງິນກູ້ຢືມໃຫ້ແກ່ລູກຄ້າ*

ເງິນກູ້ຢືມໃຫ້ແກ່ລູກຄ້າ ແມ່ນຖືກຮັບຮູ້ຕາມຕົ້ນທຶນ ແລະ ຖືກລາຍງານຕາມຍອດຄ້າງຊໍາລະບວກໃຫ້ດອກເບ້ຍຄ້າງຮັບສະສົມໂດຍຄິດໄລ່ຕາມອັດຕາດອກເບ້ຍທີ່ຢູ່ໃນສັນຍາ, ລົບໃຫ້ເງິນແຮສະເພາະສໍາລັບກິດຈະກໍາສິນເຊື່ອ.

ເງິນແຮສະເພາະສໍາລັບກິດຈະກໍາສິນເຊື່ອແມ່ນໄດ້ຖືກກໍານົດດັ່ງທີ່ສະແດງໃນ*ບົດອະທິບາຍ ເລກທີ 3.2.5.*

#### *3.1.3 ຊັບສົມບັດຄົງທີ່*

ຊັບສົມບັດຄົງທີ່ລວມມີຊັບສົມບັດຄົງທີ່ມີຕົວຕົນ, ບໍ່ມີຕົວຕົນ. ຊັບສົມບັດຄົງທີ່ມີຕົວຕົນປະກອບມີ: ອາຄານ ແລະ ການປັບປຸງ, ອຸປະກອນຫ້ອງການ, ເຟີນີເຈີ ແລະ ສິ່ງຕິດຕັ້ງ, ອຸປະກອນຄອມພິວເຕີ ແລະ ພາຫານະ. ຊັບສົມບັດຄົງທີ່ບໍ່ມີຕົວຕົນປະກອບມີຄອມພິວເຕີຊອບແວ.

ຊັບສົມບັດຄົງທີ່ໄດ້ຖືກລາຍງານຕາມຕົ້ນທຶນລົບໃຫ້ຄ່າຫລຸ້ຍຫ້ຽນສະສົມ ແລະ ຄ່າເສື່ອມ, ຖ້າມີ.

ຊັບສົມບັດຄົງທີ່ໄດ້ຖືກຫັກຄ່າຫຼຸ້ຍຫ້ຽນຕາມມູນຄ່າທັງໝົດ ນະມື້ທີ່ລາຍງານ.

**3. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)**

***3.1 ການປ່ຽນແປງນະໂຍບາຍການບັນຊີ*** (ຕໍ່)

*3.1.4 ໜີ້ຕ້ອງສົ່ງລູກຄ້າ*

ໜີ້ຕ້ອງສົ່ງລູກຄ້າແມ່ນເປີດເຜີຍຕາມຍອດເຫຼືອຕົ້ນທຶນນະມື້ທີ່ປິດບັນຊີ ບວກໃຫ້ (+) ດອກເບ້ຍຄ້າງຈ່າຍເຊິ່ງຖືກກຳນົດ ອີງຕາມອັດຕາດອກເບ້ຍທີ່ຢູ່ໃນສັນຍາ.

*3.1.5 ເງິນແຮຂອງເງິນກູ້ທີ່ຖືກຈັດຊັ້ນເປັນປະເພດໜີ້ຄວນເອົາໃຈໃສ່*

ອີງຕາມໜັງສືແນະນຳສະບັບເລກທີ 334/ທບງ ອອກໂດຍຜູ້ວ່າການທະນາຄານແຫ່ງ ສປປ ລາວ, ລົງວັນທີ 11 ມີນາ 2019, ການນຳສະເໜີເງິນແຮເງິນກູ້ທີ່ຖືກຈັດຊັ້ນເປັນໜີ້ຄວນເອົາໃຈໃສ່ແມ່ນນຳສະເໜີເປັນເງິນແຮສະເພາະ ເຊິ່ງເທົ່າກັບ "ເງິນກູ້ໃຫ້ແກ່ລູກຄ້າ" ຫຼາຍກວ່າ "ເງິນແຮສຳລັບເງິນກູ້ທີ່ເກີດດອກອອກຜົນ" ໃນໃບລາຍງານຖານະການເງິນຂອງສາຂາ (ດັ່ງທີ່ໄດ້ເປີດເຜີຍໃນບົດອະທິບາຍ ເລກທີ 3.2.5).

ນະວັນທີ 31 ທັນວາ 2019, ສາຂາບໍ່ມີເງິນກູ້ໃຫ້ແກ່ລູກຄ້າທີ່ຖືກຈັດຊັ້ນເປັນໜີ້ຄວນເອົາໃຈໃສ່.

***3.2 ນະໂຍບາຍບັນຊີນຳໃຊ້ກ່ອນວັນທີ 1 ມັງກອນ 2019***

*3.2.1 ການຮັບຮູ້ລາຍຮັບ ແລະ ລາຍຈ່າຍດອກເບ້ຍ*

ລາຍຮັບ ແລະ ລາຍຈ່າຍດອກເບ້ຍ ໄດ້ຖືກຮັບຮູ້ໃນໃບລາຍງານຜົນການດຳເນີນງານ ໂດຍອີງຕາມຫຼັກການແບບຄ້າງຮັບຄ້າງຈ່າຍທີ່ນຳໃຊ້ວິທີການຄິດໄລ່ແບບສະເໝີຕົວ ແລະ ອັດຕາດອກເບ້ຍທີ່ຖືກກຳນົດໄວ້ໃນສັນຍາເງິນກູ້ ແລະ ເງິນຝາກຂອງລູກຄ້າ.

ການຮັບຮູ້ລາຍຮັບດອກເບ້ຍຄ້າງຮັບຈະຖືກລະງັບກໍ່ຕໍ່ເມື່ອເງິນກູ້ກາຍເປັນໜີ້ທີ່ບໍ່ເກີດດອກອອກຜົນ (ເບິ່ງ*ບົດອະທິບາຍ ເລກທີ 3.2.5* ສຳລັບນິຍາມຂອງເງິນກູ້ທີ່ບໍ່ເກີດດອກອອກຜົນ) ຫຼື ເມື່ອຄະນະບໍລິຫານເຫັນວ່າຜູ້ກູ້ຢືມບໍ່ມີຄວາມສາມາດຊຳລະຄືນໄດ້ທັງດອກເບ້ຍ ແລະ ຕົ້ນທຶນ. ລາຍຮັບດອກເບ້ຍເງິນກູ້ດັ່ງກ່າວແມ່ນໄດ້ຖືກບັນທຶກເຂົ້າໃນໃບລາຍງານຜົນການດຳເນີນງານກໍ່ຕໍ່ເມື່ອໄດ້ຮັບເງິນຕົວຈິງ.

*3.2.2 ການຮັບຮູ້ລາຍຮັບຄ່າທຳນຽມ ແລະ ນາຍໜ້າ*

ຄ່າທຳນຽມ ແລະ ຄ່ານາຍໜ້າປະກອບດ້ວຍຄ່າທຳນຽມທີ່ໄດ້ຮັບຈາກການໂອນເງິນ (ລວມທັງການຊຳລະທາງການຄ້າ), ຄ່າທຳນຽມຈາກການແລກປ່ຽນເງິນຕາຕ່າງປະເທດ ແລະ ຄ່າທຳນຽມທີ່ເກີດຂຶ້ນຈາກການອອກໜັງສືຄ້ຳປະກັນທາງການເງິນ.

ລາຍຮັບຈາກຄ່າທຳນຽມ ແລະ ຄ່ານາຍໜ້າແມ່ນໄດ້ຖືກຮັບຮູ້ໃນໃບລາຍງານຜົນການດຳເນີນງານບົນພື້ນຖານຖືຫຼັກການບັນຊີເງິນສົດ.

*3.2.3 ເງິນສົດ ແລະ ທຽບເທົ່າເງິນສົດ*

ເງິນສົດ ແລະ ທຽບເທົ່າເງິນສົດແມ່ນລວມມີເງິນສົດ, ການລົງທຶນໄລຍະສັ້ນທີ່ມີສະພາບຄ່ອງສູງເຊິ່ງມີກຳນົດບໍ່ເກີນ 30 ວັນທີ່ສາມາດປ່ຽນເປັນເງິນສົດໄດ້ໃນທັນທີ; ແລະ ບັນຊີເງິນຝາກຢູ່ກັບທະນາຄານອື່ນທີ່ມີກຳນົດບໍ່ເກີນ 30 ວັນ.

## 3. ສະຫຼຸບນະໂຍບາຍການບັນຊີທີ່ສໍາຄັນ (ຕໍ່)

### 3.2 *ນະໂຍບາຍບັນຊີນໍາໃຊ້ກ່ອນວັນທີ 1 ມັງກອນ 2019* (ຕໍ່)

*3.2.4 ເງິນກູ້ຢືມແກ່ລູກຄ້າ*

ເງິນກູ້ຢືມແກ່ລູກຄ້າ ແມ່ນຖືກຮັບຮູ້ຕາມຕົ້ນທຶນ ແລະ ສະແດງຍອດເຫຼືອທ້າຍລົບໃຫ້ເງິນແຮສະເພາະສໍາລັບກິດຈະກໍາສິນເຊື່ອ.

*3.2.5 ການຈັດປະເພດ ແລະ ເງິນແຮສໍາລັບກິດຈະກໍາສິນເຊື່ອ*

*ການຈັດປະເພດສິນເຊື່ອ*

ອີງຕາມຂໍ້ຕົກລົງເລກທີ 512/ທຫລ ("ທຫລ 512") ລົງວັນທີ 29 ມິຖຸນາ 2018 ແລະ ຈົດໝາຍທາງການ ເລກທີ 898/ກຄທ ("OL898") ລົງວັນທີ 14 ພະຈິກ 2018, ສາຂາໄດ້ຈັດຊັ້ນເງິນກູ້ອອກເປັນ 5 ກຸ່ມ ໂດຍອີງຕາມ ປະຫວັດການຄ້າງຈ່າຍ ແລະ ປັດໄຈເຊີງຄຸນະພາບອື່ນໆ. ເງິນກູ້ ຖືກຈັດຊັ້ນເປັນໜີ້ປົກກະຕິ (ກຸ່ມ A) ຫຼື ໜີ້ຄວນເອົາໃຈໃສ່ (ກຸ່ມ B) ແມ່ນຈະຖືກພິຈາລະນາເປັນເງິນກູ້ທີ່ເກີດດອກອອກຜົນ, ເງິນກູ້ທີ່ຖືກຈັດຊັ້ນເປັນໜີ້ຕໍ່າກວ່າມາດຕະຖານ (ກຸ່ມ C) ຫຼື ໜີ້ສົງໄສ (ກຸ່ມ D) ຫຼື ໜີ້ສູນ (ກຸ່ມ E) ແມ່ນຈະຖືກພິຈາລະນາເປັນ ເງິນກູ້ທີ່ບໍ່ເກີດດອກອອກຜົນ ຫຼື ໜີ້ຕ້ອງຮັບທວງຍາກ ("NPL").

*ການຫັກເງິນແຮ*

ອີງຕາມ ທຫລ 512 ແລະ OL898, ສາຂາສ້າງຄັງແຮສໍາລັບເງິນກູ້ຕາມການຈັດຊັ້ນໜີ້ດັ່ງລຸ່ມນີ້:

| *ກຸ່ມ* | *ອັດຕາເງິນແຮ* | *ປະເພດຄັງເງິນແຮ (i)* | *ບັນຊີສໍາລັບຍອດເງິນແຮ (ii)* | *ບັນຊີສໍາລັບການປ່ຽນແປງຍອດເຫຼືອເງິນແຮ (iii)* |
|---|---|---|---|---|
| *ເງິນກູ້ທົ່ວໄປ* | | | | |
| A | 0.5% | ທົ່ວໄປ | ໃນສ່ວນຂອງເຈົ້າຂອງ | ລາຍຈ່າຍ/ລາຍຮັບ ອື່ນໆ |
| B | 3.0% | ສະເພາະ | ຫັກອອກຍອດເຫຼືອເງິນກູ້ | ລາຍຈ່າຍ/ລາຍຮັບ ອື່ນໆ |
| *ເງິນກູ້ບໍ່ເກີດດອກອອກຜົນ* | | | | |
| C | 20.0% | ສະເພາະ | ຫັກອອກຍອດເຫຼືອເງິນກູ້ | ເງິນແຮສຸດທິສໍາລັບ NPL |
| D | 50.0% | ສະເພາະ | ຫັກອອກຍອດເຫຼືອເງິນກູ້ | ເງິນແຮສຸດທິສໍາລັບ NPL |
| E | 100.0% | ສະເພາະ | ຫັກອອກຍອດເຫຼືອເງິນກູ້ | ເງິນແຮສຸດທິສໍາລັບ NPL |

(i) ຈໍານວນເງິນແຮແມ່ນຄິດໄລ່ຈາກສູດລຸ່ມນີ້:

ກ. ເງິນແຮທົ່ວໄປ = ອັດຕາເງິນແຮ x ຍອດເຫຼືອເງິນກູ້

ຂ. ເງິນແຮສະເພາະ = ອັດຕາເງິນແຮ x ຍອດເຫຼືອເງິນກູ້
*ເມື່ອສາຂາເລືອກທີ່ຈະບໍ່ລວມການຫຼຸດມູນຄ່າຂອງຫຼັກຊັບຄໍ້າປະກັນໃນການຄິດໄລ່ເງິນແຮອີງຕາມ ທຫລ 512 ແລະ OL 898.*

(ii) ຍອດເຫຼືອເງິນແຮສໍາລັບ *ເງິນກູ້ທີ່ເກີດດອກອອກຜົນທີ່ຖືກຈັດຊັ້ນເປັນກຸ່ມ A* ແມ່ນບັນທຶກໃນໃບລາຍງານຖານະການເງິນໃນ "ເງິນແຮທົ່ວໄປສໍາລັບກິດຈະກໍາສິນເຊື່ອ" ພາຍໃຕ້ທຶນ ແລະ ຄັງສໍາຮອງຂອງສາຂາ.

## 3. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

### *3.2 ນະໂຍບາຍບັນຊີນຳໃຊ້ກ່ອນວັນທີ 1 ມັງກອນ 2019* (ຕໍ່)

#### *3.2.5 ການຈັດປະເພດ ແລະ ຫັກເງິນແຮສຳລັບກິດຈະກຳສິນເຊື່ອ* (ຕໍ່)

ຍອດເຫຼືອສະສົມຂອງເງິນແຮສຳລັບ *NPLs ແລະ ເງິນກູ້ທີ່ບໍ່ເກີດດອກອອກຜົນທີ່ຖືກຈັດຊັ້ນເປັນກຸ່ມ B* ແມ່ນບັນທຶກໃນໃບລາຍງານຖານະການເງິນໃນ "ເງິນກູ້ໃຫ້ແກ່ລູກຄ້າ, ເງິນແຮສຸດທິສຳລັບ NPL ".

(iii) ການປ່ຽນແປງສຸດທິສຳລັບເງິນແຮຂອງ *ເງິນກູ້ທີ່ເກີດດອກອອກຜົນ* ແມ່ນຖືກບັນທຶກໃນໃບລາຍງານຜົນການດຳເນີນງານ ຢູ່ "ລາຍຈ່າຍຈາກການດຳເນີນງານອື່ນໆ" ສຳລັບລາຍຈ່າຍເງິນແຮ ແລະ "ລາຍຮັບຈາກການດຳເນີນງານອື່ນໆ", ສຳລັບການເກັບຄືນລາຍຈ່າຍເງິນແຮທີ່ວໄປ.

ການປ່ຽນແປງໃນເງິນແຮສຳລັບ *NPL* ແມ່ນໄດ້ຖືກບັນທຶກໃນໃບລາຍງານຜົນການດຳເນີນງານເປັນ "ເງິນແຮສຸດທິສຳລັບ NPL ໄດ້ຫັກ/(ເກັບຄືນຈາກ) ລາຍຈ່າຍ".

#### *3.2.6 ຊັບສິນບັດຄົງທີ່*

ຊັບສິນບັດຄົງທີ່ລວມມີຊັບສິນບັດຄົງທີ່ມີຕົວຕົນ, ຊັບສິນບັດຄົງທີ່ບໍ່ມີຕົວຕົນ. ຊັບສິນບັດຄົງທີ່ມີຕົວຕົນປະກອບມີ: ອາຄານ ແລະ ການປັບປຸງ, ອຸປະກອນຫ້ອງການ, ເຟີນີເຈີ ແລະ ສິ່ງຕິດຕັ້ງ, ອຸປະກອນຄອມພິວເຕີ ແລະ ພາຫານະ. ຊັບສິນບັດຄົງທີ່ບໍ່ມີຕົວຕົນປະກອບມີຄອມພິວເຕີຊອບແວ.

ຊັບສິນບັດຄົງທີ່ໄດ້ຖືກລາຍງານຕາມຕົ້ນທຶນລົບໃຫ້ຄ່າຫລຸ້ຍຫ້ຽນສະສົມ ແລະ ຄ່າເສື່ອມ, ຖ້າມີ.

ຕົ້ນທຶນຂອງຊັບສິນບັດປະກອບດ້ວຍມູນຄ່າຊື້ບວກກັບຄ່າໃຊ້ຈ່າຍທີ່ກ່ຽວຂ້ອງທາງກົງອື່ນໆໃນການເຮັດໃຫ້ຊັບສິນຢູ່ໃນສະພາບທີ່ພ້ອມໃຊ້ງານ.

ບັນດາລາຍຈ່າຍສຳລັບການຊື້ເພີ່ມ, ລາຍຈ່າຍການປັບປຸງ ແລະ ການຕໍ່ອາຍຸແມ່ນຈະຖືກຕີເປັນຕົ້ນທຶນ ແລະ ລາຍຈ່າຍສຳລັບຄ່າບຳລຸງຮັກສາ ແລະ ຄ່າສ້ອມແປງແມ່ນຈະຖືກບັນທຶກຢູ່ໃນໃບລາຍງານຜົນການດຳເນີນງານ.

ເມື່ອຊັບສິນບັດຖືກຂາຍ ຫຼື ໝົດອາຍຸ, ຕົ້ນທຶນ ແລະ ຄ່າຫຼຸ້ຍຫ້ຽນ/ຄ່າເສື່ອມສະສົມຈະຖືກສະສາງຈາກໃບລາຍງານຖານະການເງິນ ແລະ ກຳໄລ ຫຼື ຂາດທຶນທີ່ມາຈາກການຂາຍອອກທີ່ຖືກບັນທຶກຢູ່ໃນໃບລາຍງານຜົນການດຳເນີນງານ.

#### *3.2.7 ຄ່າຫລຸ້ຍຫ້ຽນ ແລະ ຄ່າເສື່ອມຂອງຊັບສິນບັດຄົງທີ່*

ຄ່າຫລຸ້ຍຫ້ຽນ ແລະ ຄ່າເສື່ອມຂອງຊັບສິນບັດຄົງທີ່ ແມ່ນຖືກຄິດໄລ່ຕາມວິທີຄິດໄລ່ແບບສະເໝີຕົວໃນອັດຕາທີ່ກຳນົດໃຊ້ຕໍ່ອາຍຸການນຳໃຊ້ທີ່ຄາດຄະເນຂອງຊັບສິນບັດເຫຼົ່ານັ້ນ ອີງຕາມກົດໝາຍສ່ວຍສາອາກອນຂອງ ສປປ ລາວ ເລກທີ 70/ສພຊ ລົງວັນທີ 15 ທັນວາ 2015 ອອກໂດຍປະທານສະພາແຫ່ງຊາດ ເຊິ່ງມີຜົນບັງຄັບໃຊ້ຫຼັງຈາກວັນທີ 24 ພຶດສະພາ 2016 ເປັນຕົ້ນໄປ, ອັດຕາໃຊ້ປະຈຳປີມີດັ່ງຕໍ່ໄປນີ້:

## 3. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

### *3.2 ນະໂຍບາຍບັນຊີນຳໃຊ້ກ່ອນວັນທີ 1 ມັງກອນ 2019* (ຕໍ່)

#### *3.2.7 ຄ່າຫຼຸ້ຍຫ້ຽນແລະຄ່າເສື່ອມຂອງຊັບສິນບັດຄົງທີ່* (ຕໍ່)

*ຊັບສິນບັດຄົງທີ່ມີຕົວຕົນ:*

| | |
|---|---|
| ອາຄານ ແລະ ການປັບປຸງ | 10% |
| ອຸປະກອນຫ້ອງການ | 20% |
| ເຟີນີເຈີ ແລະ ສິ່ງຕິດຕັ້ງ | 20% |
| ອຸປະກອນຄອມພິວເຕີ | 20% |
| ພາຫະນະ | 20% |
| ສິດນຳໃຊ້ທີ່ດິນ | ບໍ່ມີຄ່າເສື່ອມ |

*ຊັບສິນບັດຄົງທີ່ບໍ່ມີຕົວຕົນ:*

| | |
|---|---|
| ຄອມພິວເຕີຊັອບແວ | 50% |

#### *3.2.8 ຄັງສຳຮອງຕາມລະບຽບການ*

ພາຍໃຕ້ຂໍ້ກຳນົດຂອງກົດໝາຍວ່າດ້ວຍທະນາຄານທຸລະກິດລົງວັນທີ 7 ທັນວາ 2018, ໄດ້ກຳນົດທະນາຄານທຸລະກິດຕ້ອງຮັກສາກຳໄລສຸດທິຕາມຄັງສະສົມດັ່ງຕໍ່ໄປນີ້:

- ຄັງແຮຕາມລະບຽບການ;
- ຄັງຂະຫຍາຍທຸລະກິດ ແລະ ຄັງອື່ນໆ.

ອີງຕາມມາດຕາ 156, ກົດໝາຍວ່າດ້ວຍວິສາຫະກິດ ວັນທີ 26 ທັນວາ 2013, ສາຂາຕ້ອງໄດ້ສຳຮອງ 10% ຂອງກຳໄລຫຼັງຫັກອາກອນເພື່ອສ້າງເປັນຄັງສຳຮອງໄວ້ໃນແຕ່ລະປີ. ເມື່ອຄັງສຳຮອງດັ່ງກ່າວຮອດ 50% ຂອງທຶນຈົດທະບຽນ, ສາຂາສາມາດໂຈະການຫັກເງິນແຮ, ນອກຈາກວ່າ ກົດໝາຍຈະລະບຸໄວ້ຢ່າງອື່ນ. ຄັງຂະຫຍາຍທຸລະກິດ ແລະ ຄັງອື່ນໆຂອງສາຂາ ແມ່ນຂຶ້ນກັບການຕັດສິນໃຈຂອງຄະນະບໍລິຫານ. ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2019, ການດຳເນີນງານຂອງສາຂາແມ່ນຂາດທຶນ ແລະ ບໍ່ໄດ້ມີການຈັດສັນຄັງແຮດັ່ງກ່າວ.

#### *3.2.9 ການເຄື່ອນໄຫວທີ່ເປັນສະກຸນເງິນຕາຕ່າງປະເທດ*

ສາຂາໄດ້ປະຕິບັດຕາມລະບົບການບັນຊີ ແລະ ບັນທຶກທຸກລາຍການເຄື່ອນໄຫວຕາມສະກຸນເງິນເດີມ. ລາຍຮັບແລະ ລາຍຈ່າຍທີ່ເກີດຂຶ້ນເປັນເງິນຕາຕ່າງປະເທດພາຍໃນປີ ແມ່ນຖືກປ່ຽນຄ່າເປັນສະກຸນເງິນກີບທຸກໆເດືອນ ໂດຍການນຳໃຊ້ອັດຕາແລກປ່ຽນປະຈຳວັນຂອງເດືອນດັ່ງກ່າວ. ຊັບສິນ ແລະ ໜີ້ສິນທາງການເງິນທີ່ເປັນເງິນຕາຕ່າງປະເທດໃນທ້າຍປີ ໄດ້ຖືກຕີມູນຄ່າເປັນເງິນກີບ ຕາມອັດຕາແລກປ່ຽນໃນມື້ກະກຽມໃບລາຍງານຖານະການເງິນ. ຄ່າຜິດດ່ຽງຈາກການແລກປ່ຽນຊັບສິນ ແລະ ໜີ້ສິນທາງການເງິນໃນມື້ສ້າງໃບລາຍງານຖານະການເງິນ ແມ່ນຖືກບັນທຶກເຂົ້າໃນໃບລາຍງານຜົນການດຳເນີນງານ. ລາຍລະອຽດອັດຕາແລກປ່ຽນເງິນຕາຕ່າງປະເທດທຽບໃສ່ເງິນກີບໃນວັນທີ 31 ທັນວາ 2019 ແລະ 31 ທັນວາ 2018 ແມ່ນໄດ້ສະແດງຢູ່ຂ້າງລຸ່ມນີ້:

| | *31 ທັນວາ 2019* | *31 ທັນວາ 2018* |
|---|---|---|
| | *ກີບ* | *ກີບ* |
| ໂດລາສະຫະລັດ ("ໂດລາ") | 8,860 | 8,525 |
| ບາດໄທ ("ບາດ") | 298 | 265.30 |

## 3. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

### *3.2 ນະໂຍບາຍບັນຊີນຳໃຊ້ກ່ອນວັນທີ 1 ມັງກອນ 2019* (ຕໍ່)

#### *3.2.10 ອາກອນ*

ຄັງແຮແມ່ນຖືກສ້າງຂຶ້ນສຳລັບອາກອນກຳໄລຕາມກຳໄລໃນໄລຍະປັດຈຸບັນ ໂດຍອີງຕາມກົດໝາຍສ່ວຍສາອາກອນວ່າດ້ວຍການເກັບອາກອນພາຍໃນ ສປປ ລາວ. ສາຂາມີພັນທະຕ້ອງຈ່າຍອາກອນໃນອັດຕາ 24% ຂອງກຳໄລທັງໝົດກ່ອນຫັກອາກອນສຳລັບທ້າຍປີວັນທີ 31 ທັນວາ 2019 (2018: 24%) ໂດຍອີງຕາມກົດໝາຍສ່ວຍອາກອນສະບັບປັບປຸງເລກທີ 70/ສພຊ ລົງວັນທີ 15 ທັນວາ 2015 ເຊິ່ງມີຜົນສັກສິດຕັ້ງແຕ່ວັນທີ 24 ພຶດສະພາ 2016.

ການແຈ້ງອາກອນຂອງສາຂາຕ້ອງໄດ້ຮັບການກວດກາໂດຍເຈົ້າໜ້າທີ່ສ່ວຍສາອາກອນ. ຍ້ອນວ່າການນຳໃຊ້ກົດໝາຍສ່ວຍສາອາກອນ ແລະ ລະບຽບການຕ່າງໆ ແມ່ນມີຫຼາຍປະເພດເຊິ່ງອາດຈະແປຄວາມໄດ້ເປັນຫລາຍຢ່າງ, ມູນຄ່າທີ່ໄດ້ຖືກລາຍງານຢູ່ໃນເອກະສານລາຍງານການເງິນອາດຈະມີການປ່ຽນແປງຂຶ້ນກັບການໄລ່ລຽງຂອງເຈົ້າໜ້າທີ່ສ່ວຍສາອາກອນ.

#### *3.2.11 ຜົນປະໂຫຍດຂອງພະນັກງານ*

*ຜົນປະໂຫຍດຫຼັງອອກການ*

ຜົນປະໂຫຍດຫຼັງອອກການຈະຖືກຈ່າຍໃຫ້ພະນັກງານສາຂາຜູ້ທີ່ບຳນານ ໂດຍພະແນກກອງທຶນສະຫວັດດີການສັງຄົມເຊິ່ງຂຶ້ນກັບກະຊວງແຮງງານ ແລະ ສະຫວັດດີການສັງຄົມ. ສາຂາໄດ້ຖືກກຳນົດໃຫ້ປະກອບສ່ວນເຂົ້າໃນຜົນປະໂຫຍດຫຼັງອອກການຂອງພະນັກງານ ໂດຍການຈ່າຍເງິນເຂົ້າປະກັນສັງຄົມໃນອັດຕາ 6.00% ຂອງເງິນເດືອນພື້ນຖານຂອງພະນັກງານ ທຸກໆເດືອນ. ສາຂາບໍ່ມີພັນທະອື່ນອີກນອກຈາກຜົນປະໂຫຍດນີ້ໃຫ້ກັບພະນັກງານຫຼັງອອກການ.

*ຜົນປະໂຫຍດຈາກການຍົກເລີກສັນຍາ*

ອີງຕາມມາດຕາ 82 ຂອງກົດໝາຍວ່າດ້ວຍແຮງງານ ສະບັບປັບປຸງເລກທີ 43/ສພຊ ທີ່ອະນຸມັດໂດຍປະທານປະເທດຂອງ ສປປ ລາວ ໃນວັນທີ 28 ມັງກອນ 2014, ສາຂາມີພັນທະຈ່າຍເງິນຊົດເຊີຍໃຫ້ພະນັກງານຜູ້ທີ່ຖືກເລີກຈ້າງຍ້ອນກໍລະນີດັ່ງລຸ່ມນີ້:

- ເມື່ອພະນັກງານຂາດທັກສະຄວາມຊ່ຽວຊານ ຫຼື ບໍ່ມີສຸຂະພາບແຂງແຮງດັ່ງນັ້ນຈຶ່ງບໍ່ສາມາດສືບຕໍ່ເຮັດວຽກໄດ້;
- ເມື່ອນາຍຈ້າງຫາກໄດ້ພິຈາລະນາວ່າມີຄວາມຈຳເປັນຈະຕ້ອງໄດ້ຫລຸດຈຳນວນພະນັກງານລົງເພື່ອປັບປຸງໂຄງສ້າງວຽກງານພາຍໃນໜ່ວຍງານ.

ສຳລັບການຍົກເລີກສັນຍາຈ້າງງານໃນຂອບເຂດທີ່ກ່າວມາຂ້າງເທິງ. ນາຍຈ້າງຕ້ອງຈ່າຍເງິນເບ້ຍລ້ຽງໃຫ້ພະນັກງານໂດຍອີງໃສ່ພື້ນຖານການຄິດໄລ່ 10% ຂອງເງິນເດືອນພື້ນຖານທີ່ໄດ້ຮັບກ່ອນການເລີກຈ້າງ ສຳລັບພະນັກງານທີ່ເຮັດວຽກຕໍ່າກວ່າ 3 ປີ. ນະວັນທີ 31 ທັນວາ 2019, ບໍ່ມີພະນັກງານທະນາຄານຖືກຢຸດຈ້າງຕາມເງື່ອນໄຂທີ່ລະບຸໄວ້ຂ້າງເທິງ. ດັ່ງນັ້ນ ສາຂາບໍ່ໄດ້ຫັກຄັງແຮສຳລັບການຍົກເລີກການຈ້າງດັ່ງກ່າວໃນເອກະສານລາຍງານການເງິນ.

## 4. ລາຍຮັບສຸດທິຈາກດອກເບ້ຍ ແລະ ຄ້າຍຄືດອກເບ້ຍ

| | *2019*<br>*ພັນກີບ* | *2018*<br>*ພັນກີບ* |
|---|---|---|
| **ລາຍຮັບດອກເບ້ຍ ແລະ ຄ້າຍຄືດອກເບ້ຍຈາກ:** | | |
| ທຸລະກໍາລະຫວ່າງທະນາຄານ | 295,307 | 448,783 |
| ເງິນກູ້ໃຫ້ແກ່ລູກຄ້າ | 3,360,247 | 3,857,428 |
| | **3,655,554** | **4,306,211** |
| **ລາຍຈ່າຍດອກເບ້ຍ ແລະ ຄ້າຍຄືດອກເບ້ຍສໍາລັບ:** | | |
| ທຸລະກໍາລະຫວ່າງທະນາຄານ | (2,203) | (139,332) |
| ລູກຄ້າເງິນຝາກ | (564,822) | (315,104) |
| | **(567,025)** | **(454,436)** |
| **ລາຍຮັບສຸດທິຈາກດອກເບ້ຍ ແລະ ຄ້າຍຄືດອກເບ້ຍ** | **3,088,529** | **3,851,775** |

## 5. ລາຍຮັບສຸດທິຈາກຄ່າທໍານຽມ ແລະ ຄ່ານາຍໜ້າ

| | *2019*<br>*ພັນກີບ* | *2018*<br>*ພັນກີບ* |
|---|---|---|
| **ລາຍຮັບຈາກຄ່າທໍານຽມ ແລະ ຄ່ານາຍໜ້າຈາກ:** | | |
| ກິດຈະກໍາການຄ້າທາງການເງິນ | 122,041 | 241,918 |
| ກິດຈະກໍາການຊໍາລະສະສາງ | 1,866 | 2,319 |
| | **123,907** | **244,237** |
| **ລາຍຈ່າຍຈາກຄ່າທໍານຽມ ແລະ ຄ່ານາຍໜ້າສໍາລັບ:** | | |
| ທຸລະກໍາກັບລູກຄ້າ | (12,907) | (5,019) |
| | **(12,907)** | **(5,019)** |
| **ຄ່າທໍານຽມ ແລະ ຄ່ານາຍໜ້າສຸດທິ** | **111,000** | **239,218** |

## 6. ກໍາໄລສຸດທິຈາກການຊື້ຂາຍເງິນຕາຕ່າງປະເທດ

| | *2019*<br>*ພັນກີບ* | *2018*<br>*ພັນກີບ* |
|---|---|---|
| ກໍາໄລຈາກການແລກປ່ຽນເງິນຕາຕ່າງປະເທດ | 193,301 | 442,289 |
| ຂາດທຶນຈາກການແລກປ່ຽນເງິນຕາຕ່າງປະເທດ | (451,136) | (690,998) |
| | **(257,835)** | **(248,709)** |

## 7. ລາຍຮັບອື່ນໆຈາກການດຳເນີນງານ

| | 2019<br>*ພັນກີບ* | 2018<br>*ພັນກີບ* |
|---|---|---|
| ເກັບຄືນລາຍຈ່າຍຄ້າງຈ່າຍ | 3,863 | 48,603 |
| ລາຍຮັບອື່ນໆ | 68,886 | 34,224 |
| | **72,749** | **82,827** |

## 8. ເງິນເດືອນ ແລະ ຄ່າໃຊ້ຈ່າຍອື່ນໆໃຫ້ແກ່ພະນັກງານ

| | 2019<br>*ພັນກີບ* | 2018<br>*ພັນກີບ* |
|---|---|---|
| ຄ່າແຮງງານ ແລະ ເງິນອຸດໜູນ | 1,457,848 | 1,101,482 |
| ລາຍຈ່າຍອື່ນໆກ່ຽວກັບພະນັກງານ | 140,523 | 28,978 |
| | **1,598,371** | **1,130,460** |

## 9. ລາຍຈ່າຍບໍລິຫານອື່ນໆ

| | 2019<br>*ພັນກີບ* | 2018<br>*ພັນກີບ* |
|---|---|---|
| ຄ່າເຊົ່າຫ້ອງການ | 259,858 | 251,518 |
| ຄ່ານ້ຳມັນ | 12,740 | 9,310 |
| ຄ່າເຄື່ອງໃຊ້ຫ້ອງການ | 16,347 | 22,746 |
| ຄ່າໂຄສະນາ, ການຕະຫຼາດ ແລະ ການສົ່ງເສີມການຂາຍ | 14,980 | 1,605 |
| ຄ່າໂທລະຄົມມະນາຄົມ | 141,594 | 177,870 |
| ຄ່າສ້ອມແປງ ແລະ ບຳລຸງຮັກສາ | 194,296 | 259,885 |
| ຄ່າໄຟຟ້າ ແລະ ນ້ຳປະປາ | 68,748 | 67,764 |
| ຄ່າຜູ້ຊ່ຽວຊານ | 337,607 | 187,766 |
| ຄ່າຕ້ອນຮັບແຂກ | 360 | - |
| ຄ່າປະກັນໄພ | 45,884 | 49,285 |
| ຄ່າໃຊ້ຈ່າຍອື່ນໆ | 159,279 | 150,318 |
| | **1,251,693** | **1,178,067** |

## 10. ລາຍຈ່າຍຈາກການດຳເນີນງານອື່ນໆ

| | *2019*<br>*ພັນກີບ* | *2018*<br>*ພັນກີບ* |
|---|---|---|
| ເກັບຄືນເງິນແຮທົ່ວໄປ *(ບົດອະທິບາຍເລກທີ 14.2)* | (60,933) | (17,243) |
| ຄ່າປະກັນເງິນຝາກໃຫ້ກັບກອງທຶນປົກປ້ອງຜູ້ຝາກເງິນ | 63,963 | 36,999 |
| | **3,030** | **19,756** |

## 11. ເງິນສົດໃນຄັງ

| | *31/12/2019*<br>*ພັນກີບ* | *31/12/2018*<br>*ພັນກີບ* |
|---|---|---|
| ເງິນສົດໃນຄັງທີ່ເປັນເງິນກີບ | - | 2,097,855 |
| | **-** | **2,097,855** |

## 12. ເງິນຝາກຢູ່ ທຫລ

| | *31/12/2019*<br>*ພັນກີບ* | *31/12/2018*<br>*ພັນກີບ* |
|---|---|---|
| ເງິນຝາກກະແສລາຍວັນ | - | 10,056,605 |
| ເງິນແຮຝາກບັງຄັບ (*) | - | 1,577,241 |
| ເງິນຝາກຄ້ຳປະກັນທຶນຈົດທະບຽນ (**) | 25,031,729 | 25,031,729 |
| | **25,031,729** | **36,665,575** |

(*) ຕາມຂໍ້ກຳນົດຂອງ ທຫລ, ສາຂາໄດ້ຖືກຮຽກຮ້ອງໃຫ້ຮັກສາຄັງເງິນສົດໄວ້ກັບ ທຫລ ໃນຮູບແບບເງິນແຮຝາກບັງຄັບ, ເຊິ່ງຖືກຄິດໄລ່ໃນອັດຕາ 5.00% ສຳລັບເງິນກີບ ແລະ 10.00% ສຳລັບເງິນຕາຕ່າງປະເທດ, ຄິດໄລ່ 2 ຄັ້ງຕໍ່ເດືອນ, (2018: 5.00% ແລະ 10.00%) ຂອງຍອດເງິນຝາກຂອງລູກຄ້າເຊິ່ງມີກຳນົດຕ່ຳກວ່າ 12 ເດືອນ. ພາຍໃນປີ, ສາຂາຮັກສາເງິນແຮຝາກບັງຄັບຕາມຂໍ້ຕົກລົງຂອງທະນາຄານແຫ່ງ ສປປ ລາວ.

(**) ຕາມຂໍ້ກຳນົດຂອງດຳລັດເລກທີ 02/ນຍ ຂອງ ທຫລ, ທະນາຄານສາຂາຕ່າງປະເທດຕ້ອງຮັກສາຍອດເງິນຝາກຂັ້ນຕ່ຳຂອງເງິນຝາກພິເສດກັບ ທຫລ ເຊິ່ງທຽບເທົ່າ 25% ຂອງທຶນຈົດທະບຽນທີ່ຖອກແລ້ວເພື່ອຮັບປະກັນຄວາມສືບເນື່ອງໃນການດຳເນີນງານ. ນະວັນທີ 31 ທັນວາ 2019, ຍອດເງິນໃນບັນຊີເງິນຝາກຄ້ຳປະກັນທຶນຈົດທະບຽນຂອງສາຂາ ແມ່ນ 25,031,729 ພັນກີບ.

ໃນວັນທີ 27 ທັນວາ 2019, ສາຂາໄດ້ຢຸດເຊົາການດຳເນີນກິດຈະການ. ໃນວັນທີ 30 ທັນວາ 2019, ທຫລ ໄດ້ໂອນເງິນແຮຝາກຝາກບັງຄັບ ແລະ ເງິນຝາກຄ້ຳປະກັນທຶນຈົດທະບຽນໃຫ້ສາຂາ ໜອງດ້ວງ. ໃນວັນທີ 7 ມັງກອນ 2020, ທຫລ ອອກໜັງສືອະນຸມັດ ເລກທີ 46/BOD ວ່າດ້ວຍການປິດບັນຊີເງິນຝາກກະແສລາຍວັນ ແລະ ບັນຊີເງິນແຮຝາກບັງຄັບຂອງເມແບັງ ສາຂາ ໜອງດ້ວງ.

## 13. ເງິນຝາກກັບທະນາຄານອື່ນ

| | 31/12/2019<br>*ພັນກີບ* | 31/12/2018<br>*ພັນກີບ* |
|---|---|---|
| ເງິນຝາກກະແສລາຍວັນຢູ່ທະນາຄານພາຍໃນ | 30,927,067 | - |
| *ທະນາຄານ ເມແບັງ – ສາຂາລາວ* | 30,927,067 | 332,982 |
| ເງິນຝາກມີກຳນົດຢູ່ທະນາຄານພາຍໃນ | - | - |
| *ທະນາຄານ RHB ສາຂາ ວຽງຈັນ* | - | 24,000,000 |
| | **30,927,067** | **24,332,982** |

## 14. ເງິນກູ້ ແລະ ເງິນລ່ວງໜ້າໃຫ້ລູກຄ້າ, ຫຼັງຫັກເງິນແຮສະເພາະສຳລັບກິດຈະກຳສິນເຊື່ອສຸດທິ

| | 31/12/2019<br>*ພັນກີບ* | 31/12/2018<br>*ພັນກີບ* |
|---|---|---|
| ເງິນກູ້ ແລະ ເງິນລ່ວງໜ້າໃຫ້ລູກຄ້າ *(ບົດອະທິບາຍເລກທີ 14.1)* | 37,044,463 | 64,347,255 |
| ຫັກເງິນແຮສຳລັບເງິນກູ້ທີ່ບໍ່ເກີດດອກອອກຜົນ*(ບົດອະທິບາຍເລກທີ 14.2)* | (321,057) | (8,565,543) |
| | **36,723,406** | **55,781,712** |

| | 2019<br>*ອັດຕາດອກເບ້ຍ*<br>*% ຕໍ່ປີ* | 2018<br>*ອັດຕາດອກເບ້ຍ*<br>*% ຕໍ່ປີ* |
|---|---|---|
| ເງິນກູ້ ແລະ ເງິນລ່ວງໜ້າທີ່ເປັນເງິນກີບ | 4.00% - 12.00% | 3.00% - 13.00% |
| ເງິນກູ້ ແລະ ເງິນລ່ວງໜ້າທີ່ເປັນເງິນໂດລາ | - | 7.50% - 13.00% |
| ເງິນກູ້ ແລະ ເງິນລ່ວງໜ້າທີ່ເປັນເງິນບາດ | 9.25% | 8.00% - 9.00% |

### 14.1 *ການວິເຄາະເງິນກູ້ໃຫ້ກັບລູກຄ້າ*

*ວິເຄາະຕາມສະກຸນເງິນ*

| | 31/12/2019<br>*ພັນກີບ* | 31/12/2018<br>*ພັນກີບ* |
|---|---|---|
| ເງິນກູ້ ແລະ ເງິນລ່ວງໜ້າທີ່ເປັນເງິນກີບ | 34,928,430 | 61,228,166 |
| ເງິນກູ້ ແລະ ເງິນລ່ວງໜ້າທີ່ເປັນເງິນບາດ | 2,116,033 | 3,119,089 |
| | **37,044,463** | **64,347,255** |

## 14. ເງິນກູ້ ແລະ ເງິນລ່ວງໜ້າໃຫ້ລູກຄ້າ, ຫຼັງຫັກເງິນແຮສະເພາະສຳລັບກິດຈະກຳສິນເຊື່ອສູດທິ (ຕໍ່)

### *14.1 ການວິເຄາະເງິນກູ້ໃຫ້ກັບລູກຄ້າ* (ຕໍ່)

*ວິເຄາະຕາມສະຖານະຂອງເງິນກູ້*

| | *31/12/2019*<br>*ພັນກີບ* | *31/12/2018*<br>*ພັນກີບ* |
|---|---|---|
| ເງິນກູ້ທີ່ເກີດດອກອອກຜົນ | 36,064,501 | 45,922,361 |
| ເງິນກູ້ທີ່ບໍ່ເກີດດອກອອກຜົນ | 979,962 | 18,424,894 |
| | **37,044,463** | **64,347,255** |

*ວິເຄາະຕາມໄລຍະເວລາກູ້ຢືມ*

| | *31/12/2019*<br>*ພັນກີບ* | *31/12/2018*<br>*ພັນກີບ* |
|---|---|---|
| ເງິນກູ້ໄລຍະສັ້ນ | 4,351,643 | 7,162,769 |
| ເງິນກູ້ໄລຍະກາງ | 2,404,225 | 4,291,850 |
| ເງິນກູ້ໄລຍະຍາວ | 30,288,595 | 52,892,636 |
| | **37,044,463** | **64,347,255** |

**14.** ເງິນກູ້ ແລະ ເງິນລ່ວງໜ້າໃຫ້ລູກຄ້າ, ຫຼັງຫັກເງິນແຮສະເພາະສຳລັບກິດຈະກຳສິນເຊື່ອສຸດທິ (ຕໍ່)

***14.2*** ***ສ່ວນປ່ຽນແປງຂອງເງິນແຮສຳລັບໜີ້ເສຍເງິນກູ້***

ການເຄື່ອນໄຫວຂອງເງິນແຮສຳລັບໜີ້ເສຍເງິນກູ້ຂອງສາຂາໃນໄລຍະປີທີ່ສິ້ນສຸດວັນທີ 31 ທັນວາ 2019 ມີດັ່ງນີ້:

| | *ເງິນແຮສະເພາະສຳລັບເງິນກູ້ທີ່ບໍ່ເກີດດອກອອກຜົນ ("NPL")* | *ເງິນແຮສຳລັບໜີ້ຄວນເອົາໃຈໃສ່* | *ເງິນແຮທົ່ວໄປສຳລັບກິດຈະກຳສິນເຊື່ອ* | *ລວມ* |
|---|---|---|---|---|
| | *ພັນກີບ* | *ພັນກີບ* | *ພັນກີບ* | *ພັນກີບ* |
| **ຍອດເຫຼືອເງິນກູ້ນະວັນທີ 31 ທັນວາ 2018** | **8,565,543** | **-** | **237,882** | **8,803,425** |
| ການຈັດປະເພດຈາກເງິນແຮທົ່ວໄປເຖິງເງິນແຮສະເພາະສຳລັບໜີ້ຄວນເອົາໃຈໃສ່ພາຍໃຕ້ ທທລ 334 | - | - | - | - |
| ເງິນແຮທີ່ຫັກເປັນລາຍຈ່າຍພາຍໃນປີ | 10,506,407 | - | (60,933) | 10,445,474 |
| ສ່ວນຜິດດ່ຽງໃນອັດຕາແລກປ່ຽນ | - | - | 2,247 | 2,247 |
| ໜີ້ເສຍທີ່ລ້າງອອກພາຍໃນປີ | (18,750,893) | - | | (18,750,893) |
| **ຍອດເຫຼືອເງິນກູ້ນະວັນທີ 31 ທັນວາ 2019** | **321,057** | **-** | **179,196** | **500,253** |

## 14. ເງິນກູ້ ແລະ ເງິນລ່ວງໜ້າໃຫ້ລູກຄ້າ, ຫຼັງຫັກເງິນແຮສະເພາະສຳລັບກິດຈະກຳສິນເຊື່ອສຸດທິ (ຕໍ່)

### *14.2 ສ່ວນປ່ຽນແປງຂອງເງິນແຮສຳລັບການສູນເສຍເງິນກູ້* (ຕໍ່)

*ລາຍລະອຽດຂອງການຈັດຊັ້ນໜີ້ ແລະ ເງິນແຮ ນະວັນທີ 31 ທັນວາ 2019 ມີດັ່ງຕໍ່ໄປນີ້:*

| *ການຈັດປະເພດ* | *ຍອດເຫຼືອເງິນກູ້ ພັນກີບ* | *ເງິນແຮສຳລັບ NPL ພັນກີບ* | *ເງິນແຮສຳລັບ PL ພັນກີບ* | *ລວມເງິນແຮ ພັນກີບ* |
|---|---|---|---|---|
| ໜີ້ປົກກະຕິ | 36,064,501 | - | 179,196 | 179,196 |
| ໜີ້ຄວນເອົາໃຈໃສ່ | - | - | - | - |
| ໜີ້ຕ່ຳກວ່າມາດຕະຖານ | 563,083 | 112,617 | - | 112,617 |
| ໜີ້ສົງໄສ | 416,879 | 208,440 | - | 208,440 |
| ໜີ້ສູນ | - | - | - | - |
| ລວມ | **37,044,463** | **321,057** | **179,196** | **500,253** |

## 15. ຊັບສິນບັດຄົງທີ່

### *15.1 ຊັບສິນບັດຄົງທີ່ມີຕົວຕົນ*

| | *ອາຄານ ແລະ ການປັບປຸງ ພັນກີບ* | *ອຸປະກອນ ຫ້ອງການ ພັນກີບ* | *ເຟີນີເຈີ ແລະ ສິ່ງຕິດຕັ້ງ ພັນກີບ* | *ອຸປະກອນ ຄອມພິວເຕີ ພັນກີບ* | *ພາຫະນະ ພັນກີບ* | *ລວມ ພັນກີບ* |
|---|---|---|---|---|---|---|
| **ຕົ້ນທຶນ:** | | | | | | |
| ນະວັນທີ 31 ທັນວາ 2018 | 4,644,183 | 314,389 | 669,207 | 1,231,827 | 362,656 | 7,222,262 |
| ຂາຍອອກ | - | - | - | - | (362,656) | (362,656) |
| ນະວັນທີ 31 ທັນວາ 2019 | 4,644,183 | 314,389 | 669,207 | 1,231,827 | - | 6,859,606 |
| **ຄ່າຫຼຸ້ຍຫ້ຽນສະສົມ:** | | | | | | |
| ນະວັນທີ 31 ທັນວາ 2018 | 1,315,852 | 178,154 | 379,217 | 698,035 | 163,195 | 2,734,453 |
| ຄ່າຫຼຸ້ຍຫ້ຽນພາຍໃນປີ | 3,328,331 | 136,235 | 289,990 | 533,792 | 66,487 | 4,354,835 |
| ອື່ນໆ | - | - | - | - | (229,682) | (229,682) |
| ນະວັນທີ 31 ທັນວາ 2019 | 4,644,183 | 314,389 | 669,207 | 1,231,827 | - | 6,859,606 |
| **ມູນຄ່າສຸດທິຕາມບັນຊີ:** | | | | | | |
| ນະວັນທີ 31 ທັນວາ 2018 | 3,328,331 | 136,235 | 289,990 | 533,792 | 199,461 | 4,487,809 |
| ນະວັນທີ 31 ທັນວາ 2019 | - | - | - | - | - | - |

## *15.2 ຊັບສິນບໍ່ມີຕົວຕົນ*

| | *ລາຍຈ່າຍກ່ອນການສ້າງຕັ້ງ* | *ຄອມພີວເຕີຊັອບແວ* | *ລວມ* |
|---|---|---|---|
| | *ພັນກີບ* | *ພັນກີບ* | *ພັນກີບ* |
| **ຕົ້ນທຶນ:** | | | |
| ນະວັນທີ 31 ທັນວາ 2018 | - | - | - |
| ຊື້ເພີ່ມພາຍໃນປີ | 560,635 | 1,378,559 | 1,939,194 |
| ນະວັນທີ 31 ທັນວາ 2019 | 560,635 | 1,378,559 | 1,939,194 |
| **ຄ່າເສື່ອມສະສົມ:** | | | |
| ນະວັນທີ 31 ທັນວາ 2018 | 560,635 | 1,378,559 | 1,939,194 |
| ຫັກຄ່າເສື່ອມພາຍໃນປີ | - | - | - |
| ນະວັນທີ 31 ທັນວາ 2019 | 560,635 | 1,378,559 | 1,939,194 |
| **ມູນຄ່າສຸດທິຕາມບັນຊີ:** | | | |
| ນະວັນທີ 31 ທັນວາ 2018 | - | - | - |
| ນະວັນທີ 31 ທັນວາ 2019 | - | - | - |

## 16. ຊັບສິນອື່ນໆ

| | *31/12/2019* | *31/12/2018* |
|---|---|---|
| | *ພັນກີບ* | *ພັນກີບ* |
| ລາຍຈ່າຍລ່ວງໜ້າລໍຖ້າການແບ່ງສ່ວນ | 272,560 | 18,276 |
| ຊັບສິນອື່ນໆ | 297,598 | 119,704 |
| | **570,158** | **137,980** |

## 17. ໜີ້ຕ້ອງສົ່ງທະນາຄານອື່ນ

| | *31/12/2019* | *31/12/2018* |
|---|---|---|
| | *ພັນກີບ* | *ພັນກີບ* |
| **ຍອດເຫຼືອຂອງທະນາຄານ ເມແບັງ ສາຂາລາວ** | | |
| ເງິນຝາກມີກຳນົດ | - | 8,000,000 |
| | **-** | **8,000,000** |

## 18. ໜີ້ຕ້ອງສົ່ງໃຫ້ລູກຄ້າ

ລາຍລະອຽດຂອງມູນຄ່າໜີ້ຕ້ອງສົ່ງໃຫ້ລູກຄ້າ ນະວັນທີ 31 ທັນວາ 2019 ມີດັ່ງນີ້:

| | *ສະກຸນເງິນກີບ*<br>*ພັນກີບ* | *ສະກຸນເງິນຕາຕ່າງປະເທດ*<br>*ພັນກີບ* | *ລວມ*<br>*ພັນກີບ* |
|---|---|---|---|
| ເງິນຝາກກະແສລາຍວັນ | 515,662 | 2,035,987 | 2,551,649 |
| ເງິນຝາກປະຢັດ | 261,181 | 1,578,294 | 1,839,475 |
| ເງິນຝາກມີກຳນົດ | 405,610 | 10,716,912 | 11,122,522 |
| | **1,182,453** | **14,331,193** | **15,513,646** |

ລາຍລະອຽດຂອງມູນຄ່າໜີ້ຕ້ອງສົ່ງໃຫ້ລູກຄ້າ ນະວັນທີ 31 ທັນວາ 2018 ມີດັ່ງນີ້:

| | *ສະກຸນເງິນກີບ*<br>*ພັນກີບ* | *ສະກຸນເງິນຕາຕ່າງປະເທດ*<br>*ພັນກີບ* | *ລວມ*<br>*ພັນກີບ* |
|---|---|---|---|
| ເງິນຝາກກະແສລາຍວັນ | 1,732,902 | 841,448 | 2,574,350 |
| ເງິນຝາກປະຢັດ | 367,541 | 6,194,402 | 6,561,943 |
| ເງິນຝາກມີກຳນົດ | 5,818,111 | 8,502,693 | 14,320,804 |
| | **7,918,554** | **15,538,543** | **23,457,097** |

ອັດຕາດອກເບ້ຍໜີ້ຕ້ອງສົ່ງລູກຄ້າມີດັ່ງຕໍ່ໄປນີ້:

| | *2019*<br>*ອັດຕາດອກເບ້ຍຕໍ່ປີ* | *2018*<br>*ອັດຕາດອກເບ້ຍຕໍ່ປີ* |
|---|---|---|
| ເງິນຝາກກະແສລາຍວັນທີ່ເປັນສະກຸນເງິນກີບ | ບໍ່ມີດອກເບ້ຍ | ບໍ່ມີດອກເບ້ຍ |
| ເງິນຝາກກະແສລາຍວັນທີ່ເປັນສະກຸນເງິນຕາຕ່າງປະເທດ | ບໍ່ມີດອກເບ້ຍ | ບໍ່ມີດອກເບ້ຍ |
| ເງິນຝາກປະຢັດທີ່ເປັນສະກຸນເງິນກີບ | 1.89% | 1.89% |
| ເງິນຝາກປະຢັດທີ່ເປັນສະກຸນເງິນໂດລາ | 1.75% | 1.75% |
| ເງິນຝາກປະຢັດທີ່ເປັນສະກຸນເງິນບາດ | 1.75% | 1.75% |
| ເງິນຝາກມີກຳນົດທີ່ເປັນສະກຸນເງິນກີບ | 3.16% - 6.77% | 3.20% - 6.77% |
| ເງິນຝາກມີກຳນົດທີ່ເປັນສະກຸນເງິນຕາຕ່າງປະເທດ | 2.65% - 5.00% | 3.00% - 5.00% |

## 19. ອາກອນກຳໄລ

### *19.1 ອາກອນຕ້ອງສົ່ງ*

| | *31/12/2019*<br>*ພັນກີບ* | *31/12/2018*<br>*ພັນກີບ* |
|---|---|---|
| ອາກອນກຳໄລຕ້ອງມອບ | - | - |
| ອາກອນຈາກພາກສ່ວນອື່ນ | 66 | 34,575 |
| | **66** | **34,575** |

### *19.2 ອາກອນກຳໄລ*

ເງິນແຮແມ່ນຖືກສ້າງຂຶ້ນສຳລັບອາກອນກຳໄລຕາມກຳໄລຂອງປີປັດຈຸບັນ, ໂດຍອີງຕາມກົດໝາຍສ່ວຍສາອາກອນວ່າດ້ວຍການເກັບອາກອນພາຍໃນ ສປປ ລາວ. ສາຂາມີພັນທະຕ້ອງຈ່າຍອາກອນໃນອັດຕາ 24% ຂອງກຳໄລທັງໝົດກ່ອນຫັກອາກອນ ໂດຍອີງຕາມກົດໝາຍສ່ວຍອາກອນສະບັບປັບປຸງເລກທີ 70/ສພຊ ລົງວັນທີ 15 ທັນວາ 2015 ເຊິ່ງມີຜົນສັກສິດຕັ້ງແຕ່ວັນທີ 24 ພຶດສະພາ 2016.

ລາຍລະອຽດຄັງແຮອາກອນກຳໄລສຳລັບປີ 2018 ແລະ 2019 ມີດັ່ງລຸ່ມນີ້:

| | *2019*<br>*ພັນກີບ* | *2018*<br>*ພັນກີບ* |
|---|---|---|
| (ຂາດທຶນ)/ກຳໄລກ່ອນຫັກອາກອນຕາມລະບົບບັນຊີລາວ | (14,699,893) | (8,102,014) |
| ຂາດທຶນທາງອາກອນສະສົມຍົກໄປຫັກຕໍ່ | - | - |
| **ຂາດທຶນກ່ອນຫັກອາກອນ** | **(14,699,893)** | **(8,102,014)** |
| ລາຍຈ່າຍອາກອນກຳໄລ 24% ຂອງລາຍໄດ້ທີ່ຕ້ອງເສຍອາກອນ | - | - |
| **ອາກອນກຳໄລຈ່າຍໃນປີປັດຈຸບັນ** | - | - |
| ອາກອນກຳໄລ(ເກັບຄືນ)/ຕ້ອງຈ່າຍໃນຕົ້ນປີ | - | - |
| ອາກອນກຳໄລຈ່າຍພາຍໃນປີ | - | - |
| **ອາກອນກຳໄລເກັບຄືນທ້າຍປີ** | - | - |

ການແຈ້ງອາກອນຂອງສາຂາຕ້ອງໄດ້ຮັບການກວດກາໂດຍເຈົ້າໜ້າທີ່ສ່ວຍສາອາກອນ. ຍ້ອນວ່າການນຳໃຊ້ກົດໝາຍສ່ວຍສາອາກອນ ແລະ ລະບຽບການຕ່າງໆ ແມ່ນມີຫຼາຍປະເພດເຊິ່ງອາດຈະແປຄວາມໄດ້ເປັນຫລາຍຢ່າງ, ມູນຄ່າທີ່ໄດ້ຖືກລາຍງານຢູ່ໃນເອກະສານລາຍງານການເງິນອາດຈະມີການປ່ຽນແປງຂຶ້ນກັບການໄລ່ລຽງຂອງເຈົ້າໜ້າທີ່ສ່ວຍສາອາກອນ.

## 20. ໜີ້ຕ້ອງສົ່ງອື່ນໆ

| | *31/12/2019*<br>*ພັນກີບ* | *31/12/2018*<br>*ພັນກີບ* |
|---|---|---|
| ໜີ້ທີ່ຕ້ອງສົ່ງໃຫ້ພາກສ່ວນພາຍນອກ | 494,558 | 292,465 |
| ໜີ້ຕ້ອງສົ່ງໃຫ້ກັບພະນັກງານ | 237,412 | 62,606 |
| ລາຍຮັບລໍຖ້າຕັດບັນຊີ | 15,925 | 30,086 |
| | **747,895** | **385,157** |

## 21. ທຶນຈົດທະບຽນທີ່ຖອກແລ້ວ

ການເຄື່ອນໄຫວຂອງທຶນຈົດທະບຽນທີ່ຖອກແລ້ວພາຍໃນປີແມ່ນມີດັ່ງລຸ່ມນີ້:

| | *2019*<br>*ພັນກີບ* | *2018*<br>*ພັນກີບ* |
|---|---|---|
| ຍອດຍົກມາ | 100,121,729 | 100,121,729 |
| ສ່ວນຜິດດ່ຽງແລກປ່ຽນເງິນຕາຕ່າງປະເທດ | - | - |
| **ຍອດເຫຼືອທ້າຍ** | **100,121,729** | **100,121,729** |

## 22. ເງິນສົດ ແລະ ທຽບເທົ່າເງິນສົດ

| | *31/12/2019*<br>*ພັນກີບ* | *31/12/2018*<br>*ພັນກີບ* |
|---|---|---|
| ເງິນສົດໃນຄັງ | - | 2,097,855 |
| ເງິນຝາກກະແສລາຍວັນຢູ່ ທຫລ | - | 10,056,605 |
| ເງິນຝາກກະແສລາຍວັນຢູ່ ທະນາຄານອື່ນ | 30,927,067 | 332,982 |
| | **30,927,067** | **12,487,442** |

## 23. ລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ

ລາຍການເຄື່ອນໄຫວກັບພາກສ່ວນອື່ນທີ່ກ່ຽວຂ້ອງ ແມ່ນລວມທຸກລາຍການເຄື່ອນໄຫວທີ່ໄດ້ດຳເນີນງານກັບພາກສ່ວນອື່ນ ເຊິ່ງມີສາຍພົວພັນກັບສາຂາ. ພາກສ່ວນດັ່ງກ່າວແມ່ນຈະມີສ່ວນກ່ຽວຂ້ອງກັບສາຂາຖ້າວ່າ :

(ກ) ແບບທາງກົງ ຫຼື ແບບທາງອ້ອມ ໂດຍຜ່ານໜຶ່ງ ຫຼື ຫຼາຍສື່ກາງ, ເຊິ່ງພາກສ່ວນດັ່ງກ່າວ:

- ມີການຄວບຄຸມ, ຖືກຄວບຄຸມໂດຍ ຫຼື ພາຍໃຕ້ການຄວບຄຸມໂດຍທະນາຄານ (ໃນນີ້ລວມມີ ທະນາຄານສຳນັກງານໃຫຍ່, ສາຂາ ແລະ ສະມາຊິກຂອງສາຂາ)
- ມີຜົນປະໂຫຍດນຳກັນກັບສາຂາ ເຊິ່ງມີອິດທິພົນທີ່ສຳຄັນຕໍ່ກັບສາຂາ; ຫຼື
- ມີສ່ວນຮ່ວມໃນການຄວບຄຸມສາຂາ;

(ຂ) ພາກສ່ວນດັ່ງກ່າວແມ່ນມີຮຸ້ນສ່ວນນຳສາຂາ;

**23. ລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ (ຕໍ່)**

(ຄ) ພາກສ່ວນທີ່ກ່ຽວຂ້ອງແມ່ນສະມາຊິກຄົນສຳຄັນຂອງ ຜູ້ບໍລິຫານຫຼັກຂອງສາຂາ ຫຼື ທະນາຄານສຳນັກງານໃຫຍ່;

(ງ) ພາກສ່ວນທີ່ກ່ຽວຂ້ອງແມ່ນສະມາຊິກທີ່ໃກ້ຊິດຂອງຄອບຄົວຂອງບຸກຄົນສະເພາະທີ່ໄດ້ກ່າວເຖິງໃນຂໍ້ (ກ) ຫຼື (ຄ);

(ຈ) ພາກສ່ວນທີ່ກ່ຽວຂ້ອງແມ່ນຜູ້ທີ່ຄວບຄຸມສາຂາ, ມີສ່ວນຮ່ວມໃນການຄວບຄຸມ ຫຼື ມີອິດທິພົນທີ່ສຳຄັນ, ຫຼື ມີສິດອຳນາດໃນການອອກສຽງໃນຕໍ່ທະນາຄານ ທີ່ດຳເນີນທຸລະກິດ, ໂດຍທາງກົງ ຫຼື ທາງອອ້ມ, ທຸກໆພາກສ່ວນທີ່ໄດ້ກ່າວເຖິງໃນຂໍ້ (ຄ) ຫຼື (ງ); ຫຼື

(ສ) ພາກສ່ວນທີ່ກ່ຽວຂ້ອງ ເປັນຜົນປະໂຫຍດຫຼັງອອກການ ຂອງພະນັກງານໃນສາຂາ ຫຼື ທະນາຄານອື່ນໆທີ່ມີສາຍພົວພັນກັບສາຂາ.

ຍອດເຫຼືອກັບພາກສ່ວນທີ່ກ່ຽວຂ້ອງ ນະວັນທີ 31 ທັນວາ 2019 ແລະ ວັນທີ 31 ທັນວາ 2018 ແມ່ນມີດັ່ງນີ້:

| | *31/12/2019*<br>*ໜີ້ຕ້ອງຮັບ/*<br>*(ໜີ້ຕ້ອງສົ່ງ)*<br>*ພັນກີບ* | *31/12/2018*<br>*ໜີ້ຕ້ອງຮັບ/*<br>*(ໜີ້ຕ້ອງສົ່ງ)*<br>*ພັນກີບ* |
|---|---|---|
| **ເງິນຝາກລະຫວ່າງສາຂາກັບທະນາຄານ ເມແບັງ – ສາຂາລາວ** | | |
| ບັນຊີຂອງທະນາຄານທີ່ເປີດກັບສາຂາ | 30,927,067 | 332,982 |
| ເງິນຝາກມີກຳນົດ | - | (8,000,000) |
| | **30,927,067** | **(7,667,018)** |

ການເຄື່ອນໄຫວທີ່ສຳຄັນກັບພາກສ່ວນທີ່ກ່ຽວຂ້ອງພາຍໃນປີມີດັ່ງນີ້:

| | *2019*<br>*ພັນກີບ* | *2018*<br>*ພັນກີບ* |
|---|---|---|
| ລາຍຈ່າຍດອກເບ້ຍສຳລັບເງິນຝາກມີກຳນົດຈາກທະນາຄານ ເມແບັງ – ສາຂາລາວ | - | (101,934) |
| | **-** | **(101,934)** |

***ການເຄື່ອນໄຫວກັບຄະນະບໍລິຫານຫຼັກຂອງສາຂາ***

ຄ່າຕອບແທນຂອງສະມາຊິກສະພາບໍລິຫານມີດັ່ງນີ້:

| | *2019*<br>*ພັນກີບ* | *2018*<br>*ພັນກີບ* |
|---|---|---|
| ເງິນເດືອນ | 522,438 | 297,002 |
| ໂບນັດ ແລະ ຜົນປະໂຫຍດອື່ນໆ | 97,680 | 73,436 |
| | **620,118** | **370,438** |

## 24. ເຫດການຫຼັງວັນທີຂອງໃບລາຍງານຖານະການເງິນ

ພາຍຫຼັງວັນທີຂອງໃບລາຍງານຖານະການເງິນສະບັບນີ້, ນະມື້ເລີ່ມວັນທີ 1 ມັງກອນ 2020 ສາຂາແມ່ນໄດ້ສຳເລັດການໂອນຊັບສິນ ແລະ ໜີ້ສິນທັງໝົດທີ່ຕິດພັນກັບສິດ ແລະ ພັນທະໃຫ້ ທະນາຄານ ມາເລຍັນ ເບີຫັດ ສາຂາລາວອີງຕາມແຜນການທີ່ອະນຸມັດໂດຍ ທຫລ.

ນະວັນທີຂອງບົດລາຍງານການເງິນສະບັບນີ້, ທຫລ ບໍ່ໄດ້ອອກໜັງສືທາງການເພື່ອຖອນໃບອະນຸຍາດດຳເນີນທຸລະກິດຂອງ ສາຂາ ໜອງດ້ວງ.

ນອກເໜືອຈາກທີ່ກ່າວມາຂ້າງເທິງ, ບໍ່ມີເຫດການສຳຄັນໃດໆເກີດຂຶ້ນຫຼັງຈາກວັນທີຂອງໃບລາຍງານຖານະການເງິນ ທີ່ຮຽກຮ້ອງໃຫ້ມີການດັດແກ້ ຫຼື ເປີດເຜີຍໃນເອກະສານລາຍງານການເງິນຂອງສາຂາ.

ກະກຽມໂດຍ:

ທ່ານ ສິດທິພົນ ສີສຸດາຈັນ
ຫົວໜ້າພະແນກການເງິນ

ອະນຸມັດໂດຍ:

ທ່ານ ນາງ ແພງສີມຈິດ ພົນໂພສີ
ຜູ້ອຳນວຍການສາຂາ

ນະຄອນຫຼວງວຽງຈັນ, ສປປລາວ

15 ເມສາ 2020